ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC



ບົດລາຍງານການເຄື່ອນໄຫວທຸລະກິດ

ໄລຍະ 3 ເດືອນ ປະຈຳປີ 2026

ສິ້ນສຸດວັນທີ 31 ມີນາ 2026

www.bcel.com.la

I. ສະພາບລວມຂອງ ທຄຕລ

1. ວິໄສທັດ

ທຄຕລ ຍັງສືບຕໍ່ຮັກສາວິໄສທັດ ໃນແຜນຍຸດທະສາດໄລຍະຍາວ **2025-2029** ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງ ຄື: **"ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"**.

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ບັນລຸຕາມວິໄສທັດ ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ ນັ້ນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ພັດທະນາປັບປຸງດ້ານການບໍລິການໃຫ້ແທດເໝາະກັບການປ່ຽນແປງໃນໄລຍະໃໝ່ ໂດຍຖືເອົາລູກຄ້າເປັນໃຈກາງ; ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການ BASEL II; ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ; ນຳໃຊ້ນະວັດຕະກຳໃໝ່ໃນທຸລະກິດ ຫັນສູ່ຮູບແບບ Digital Banking ຢ່າງເຕັມຮູບແບບ; ພັດທະນາລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ Cyber Security ໄດ້ມາດຕະຖານສາກົນ; ພັດທະນາບຸກຄະລາກອນໃນແຕ່ລະດ້ານໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ; ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ; ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ; ສ້າງບັນດາເງື່ອນໄຂດ້ານຕ່າງໆ ເພື່ອປະຕິບັດໄດ້ບັນດາມາດຕະຖານຂອງສາກົນ.

❖ ແຜນງານ ແລະ ໂຄງການ 2026

ເພື່ອເຮັດໃຫ້ ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນ ໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງແຜນງານ ແລະ ໂຄງການທີ່ຈັດຕັ້ງປະຕິບັດໃນປີ **2026** ປະກອບມີ **15** ແຜນງານ ແລະ **50** ໂຄງການ ດັ່ງລາຍລະອຽດລຸ່ມນີ້:

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນ** (ປະກອບມີ **4** ແຜນງານ ແລະ **17** ໂຄງການ)

- ບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ເຂັ້ມແຂງ ປະກອບມີ **7** ໂຄງການ;
- ຄຸ້ມຄອງ ແລະ ຂະຫຍາຍສິນເຊື່ອ ຢ່າງມີປະສິດທິພາບ ປະກອບມີ **5** ໂຄງການ;
- ພັດທະນາດ້ານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ ປະກອບມີ **3** ໂຄງການ;
- ສ້າງພື້ນຖານການຄຸ້ມຄອງຄວາມສ່ຽງ ແລະ ສະກັດກັ້ນການຟອກເງິນ ໃຫ້ເຂັ້ມແຂງ ປະກອບມີ **2** ໂຄງການ.

- **ຍຸດທະສາດທີ 2: ຫັນເປັນທັນສະໄໝ ແລະ ນຳໃຊ້ເຕັກໂນໂລຊີໃໝ່ໃນການດຳເນີນທຸລະກິດ** (ປະກອບມີ **5** ແຜນງານ ແລະ **22** ໂຄງການ)

- ພັດທະນາ ແລະ ຄຸ້ມຄອງລະບົບໄອທີໃຫ້ທັນສະໄໝ ປະກອບມີ **6** ໂຄງການ;
- ພັດທະນາຜະລິດຕະພັນ ເພື່ອຫັນສູ່ການບໍລິການ ໃນຮູບແບບ Digital Banking ປະກອບມີ **8** ໂຄງການ;
- ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝ ປະກອບມີ **4** ໂຄງການ;
- ພັດທະນາການອະນຸມັດສິນເຊື່ອຫັນເປັນທັນສະໄໝ ປະກອບມີ **3** ໂຄງການ;
- ປັບປຸງ ແລະ ພັດທະນາລະບົບບັນຊີ-ລາຍງານການເງິນໃຫ້ເປັນທັນສະໄໝ ປະກອບມີ 1 ໂຄງການ.

- **ຍຸດທະສາດທີ 3: ຫັນສູ່ມາດຕະຖານສາກົນ ໃນການຄຸ້ມຄອງການບໍລິຫານ ແລະ ບໍລິການ** (ປະກອບມີ **6** ແຜນງານ ແລະ **11** ໂຄງການ)

- ຫັນການຄຸ້ມຄອງ ແລະ ບໍລິຫານອົງກອນໃຫ້ຍືນຍົງຕາມທິດສີຂຽວ Sustainability and Green goal ປະກອບມີ **3** ໂຄງການ;
- ການປະຕິບັດເພື່ອຫັນສູ່ຫຼັກການບາເຊວ II ປະກອບມີ **3** ໂຄງການ;

- ພັດທະນາວຽກງານບັນຊີ ແລະ ລາຍງານການເງິນ ໃຫ້ໄດ້ຕາມມາດຕະຖານ IFRS ປະກອບມີ **1** ໂຄງການ;
- ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ກ້າວສູ່ມາດຕະຖານ COSO ປະກອບມີ **2** ໂຄງການ;
- ພັດທະນາວຽກງານພາຍໃນໃຫ້ໄດ້ຕາມມາດຖານສາກົນ **ISO9001:2015** ປະກອບມີ **1** ໂຄງການ;
- ພັດທະນາໂຄງການ PCI Compliance ຫຼື Payment Card Industry Data Security Standard ປະກອບມີ **1** ໂຄງການ.

II. ຖານະການເງິນ ແລະ ຜົນດຳເນີນງານ

1. ເສດຖະກິດມະຫາພາກ ສປປ ລາວ ແລະ ທ່າອ່ຽງໃນຕໍ່ໜ້າ

ໃນໄຕມາດ 1 ປີ 2026, ເສດຖະກິດ ສປປ ລາວ ຍັງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະບັນຫາຄວາມສະຖຽນລະພາບທາງດ້ານເງິນຕາ, ການເພີ່ມຂຶ້ນຂອງລາຄານ້ຳມັນ ແລະ ອັດຕາເງິນເຟີ້ທີ່ຍັງສືບຕໍ່ຢູ່ໃນລະດັບສູງ. ອີງຕາມການຄາດຄະເນຂອງສູນສະຖິຕິແຫ່ງຊາດ, ຍອດຜະລິດຕະພັນພາຍໃນ (GDP) ໃນໄຕມາດ 1 ປີ 2026 ຄາດວ່າຈະຂະຫຍາຍຕົວຢູ່ໃນລະດັບ 5.5% ເຊິ່ງກົງກັບມະຕິສະພາເລກທີ 177/ສພຊ, ລັດຖະບານໄດ້ວາງຄາດໝາຍການເຕີບໂຕເສດຖະກິດຂອງປະເທດໄວ້ໃນລະດັບ 5.5% ຂຶ້ນໄປ. ໂດຍແບ່ງຕາມຂະແໜງການດັ່ງນີ້: ຂະແໜງກະສິກຳຂະຫຍາຍຕົວເພີ່ມຂຶ້ນ 4.9%, ຂະແໜງອຸດສາຫະກຳຂະຫຍາຍຕົວໃນລະດັບ 5.6% ແລະ ຂະແໜງການບໍລິການຂະຫຍາຍຕົວ 5.8%.

ໃນຂະນະດຽວກັນ, ທະນາຄານໂລກ (World Bank) ໄດ້ຄາດຄະເນວ່າເສດຖະກິດ ສປປ ລາວ ໃນປີ 2026 ຈະຂະຫຍາຍຕົວຊ້າລົງມາຢູ່ໃນລະດັບ 3.5% ໂດຍສາເຫດຫຼັກແມ່ນມາຈາກການເພີ່ມຂຶ້ນຂອງລາຄານ້ຳມັນເຊື້ອໄຟໃນຕະຫຼາດສາກົນທີ່ສົ່ງຜົນກະທົບໂດຍກົງຕໍ່ເສດຖະກິດພາຍໃນປະເທດການເພີ່ມຂຶ້ນຂອງລາຄານ້ຳມັນ ແລະ ຄ່າຂົນສົ່ງໄດ້ສ້າງຜົນກະທົບເປັນວົງກວ້າງຕໍ່ຫຼາຍຂະແໜງການໂດຍສະເພາະແມ່ນ ຂະແໜງກະສິກຳ ທີ່ມີຕົ້ນທຶນການຜະລິດເພີ່ມສູງຂຶ້ນ, ຂະແໜງບໍ່ແຮ່ ແລະ ພະລັງງານ ທີ່ມີຕົ້ນທຶນການດຳເນີນງານ ແລະ ໂຄງສ້າງລາຍຈ່າຍເພີ່ມຂຶ້ນ ແລະ ຂະແໜງການທ່ອງທ່ຽວ ເນື່ອງຈາກຄ່າເດີນທາງທີ່ສູງຂຶ້ນສົ່ງຜົນໃຫ້ຈຳນວນນັກທ່ອງທ່ຽວຫຼຸດລົງ.

ໂດຍລວມແລ້ວ, ເສດຖະກິດ ສປປ ລາວ ໃນໄຕມາດ 1 ປີ 2026 ຍັງມີທ່າອ່ຽງການເຕີບໂຕໃນລະດັບໜຶ່ງ ໂດຍສະເພາະຈາກຂະແໜງການບໍລິການ ແລະ ອຸດສາຫະກຳ. ແນວໃດກໍຕາມ, ປັດໄຈພາຍນອກໂດຍສະເພາະຄວາມຜັນຜວນຂອງລາຄານ້ຳມັນໃນຕະຫຼາດສາກົນ ຍັງຄົງເປັນສິ່ງທ້າທາຍສຳຄັນທີ່ສົ່ງຜົນກະທົບຕໍ່ສະຖຽນລະພາບທາງເສດຖະກິດໃນຫຼາຍດ້ານ. ດັ່ງນັ້ນ, ການຕິດຕາມສະຖານະການຢ່າງໃກ້ຊິດ, ການອອກນະໂຍບາຍທີ່ຍືດຍຸ່ນ ແລະ ການເສີມສ້າງຄວາມເຂັ້ມແຂງຂອງເສດຖະກິດພາຍໃນປະເທດຈະເປັນປັດໄຈສຳຄັນທີ່ຈະຊ່ວຍໃຫ້ ສປປ ລາວ ສາມາດຮັບມືກັບຄວາມທ້າທາຍ ແລະ ບັນລຸເປົ້າໝາຍການເຕີບໂຕທາງເສດຖະກິດໄດ້ຢ່າງຍືນຍົງ.

1.1 ອັດຕາເງິນເຟີ້

ອັດຕາເງິນເຟີ້ ຂອງ ສປປ ລາວ ເດືອນມີນາ 2026 ແມ່ນສືບຕໍ່ເພີ່ມຂຶ້ນຈາກເດືອນຜ່ານມາ, ມາຢູ່ທີ່ລະດັບ 9.7% (ເດືອນກຸມພາ 6.2%, ເດືອນມັງກອນ 5.1%). ໃນນັ້ນ, ໝວດຄົມສະນາຄົມ ແລະ ຂົນສົ່ງ ເພີ່ມຂຶ້ນ 18.1%; ຮອງລົງມາແມ່ນໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງຫຸງຕົ້ມ (17.2%); ໝວດຮັກສາສຸຂະພາບ ແລະ ຢາ (13.9%); ໝວດການສຶກສາ (12.2%); ໝວດເຄື່ອງດື່ມແອລກໍຮໍ ແລະ ຢາສູບ (10.0%); ໝວດຮ້ານອາຫານ ແລະ ໂຮງແຮມ (8.7%); ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ (7.9%); ໝວດບັນ ເທີງ ແລະ ການພັກຜ່ອນ (6.9%); ໝວດເຄື່ອງໃຊ້ໃນເຮືອນ (5.7%). ສ່ວນໝວດສິນຄ້າ ແລະ ບໍລິການອື່ນໆ ເພີ່ມຂຶ້ນ 39.8% ເປັນຕົ້ນແມ່ນລາຄາຄຳ. ສາເຫດຕົ້ນຕໍຂອງອັດຕາເງິນເຟີ້ໃນເດືອນ ມີນາ 2026 ເພີ່ມຂຶ້ນສູງແມ່ນມາຈາກສະພາບຄວາມບໍ່ສະຫງົບ ຢູ່ ຕາເວັນອອກກາງ ຊຶ່ງສ້າງຜົນກະທົບຕໍ່ແຫຼ່ງການຜະລິດ ແລະ ການຂົນສົ່ງນ້ຳມັນເຊື່ອໄຟເຮັດໃຫ້ມີການປັບລາຄາຂຶ້ນສູງທັງຢູ່ຕະຫຼາດສາກົນ ແລະ ພາຍໃນເຊັ່ນ:

- **ລາຄານ້ຳມັນເຊື້ອໄຟພາຍໃນປະເທດ:** ໃນເດືອນມີນາ 2026 (ວັນທີ 1 ຫາ 24) ມີການປັບລາຄານ້ຳມັນເຊື້ອໄຟ 8 ຄັ້ງ. ໃນນັ້ນ, ປັບຂຶ້ນ 7 ຄັ້ງ ແລະ ປັບລົງ 1 ຄັ້ງ ເຊິ່ງເມື່ອສັງເກດລາຄານ້ຳມັນຈາກທ້າຍເດືອນ ກຸມພາ ຫາ ກາງເດືອນມີນາ ນ້ຳມັນກະຊວນໄດ້ປັບຈາກ 20,264 ກີບ/ລິດ ມາເປັນ 42,684 ກີບ/ລິດ (ເພີ່ມຂຶ້ນ 110.6%); ແອັດຊັງ ທຳມະດາປັບຈາກ 22,664 ກີບ/ລິດ ມາເປັນ 40,384 ກີບ/ລິດ (ເພີ່ມຂຶ້ນ 80.2%).
- **ຜົນກະທົບຕໍ່ລາຄາຄອງຊີບ:** ເມື່ອລາຄານ້ຳມັນສູງຂຶ້ນ ຕົ້ນທຶນການຂົນສົ່ງກໍ່ປັບຕົວສູງຂຶ້ນຕາມຢ່າງຫຼີກລ່ຽງບໍ່ໄດ້ ສິ່ງຜົນໂດຍກົງໃຫ້ລາຄາປີ້ຍົນ ແລະ ປີ້ລົດໂດຍສານຕ່າງໆຖືກປັບຂຶ້ນ. ໃນຂະນະດຽວກັນລາຄາສິນຄ້າອຸປະໂພກບໍລິໂພກຫຼາຍລາຍການກໍ່ໄດ້ຮັບຜົນກະທົບໃນທິດທາງດຽວກັນ. ເຖິງວ່າລາຄາສິນຄ້າຈະເພີ່ມຂຶ້ນ, ແຕ່ສະຖຽນລະພາບຂອງຄ່າເງິນກີບໃນປະຈຸບັນຍັງຖືວ່າປ່ຽນແປງພຽງເລັກນ້ອຍເມື່ອທຽບກັບເງິນໂດລາ ແລະ ເງິນບາດ ເຊິ່ງຊ່ວຍຫຼຸດຜ່ອນແຮງກົດດັນຈາກສິນຄ້ານຳເຂົ້າໄດ້ບາງສ່ວນ. ພ້ອມດຽວກັນນັ້ນ, ການຮັກສາອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕົວເລກດຽວ ຫຼື ຕ່ຳກວ່າ 10% ໃນປີນີ້ຖືວ່າມີຄວາມທ້າທາຍພໍສົມຄວນເນື່ອງຈາກສະພາບແວດລ້ອມທາງເສດຖະກິດທີ່ມີຄວາມບໍ່ແນ່ນອນໂດຍສະເພາະລາຄານ້ຳມັນເຊິ່ງເປັນຕົ້ນທຶນຫຼັກໃນການຂັບເຄື່ອນເສດຖະກິດໃນທຸກຂະແໜງການ[1]

[1] CPI_Monthly_Report_32026.pdf

1.2 ອັດຕາແລກປ່ຽນ

- ໄຕມາດ 1/2026 ທຫລ ສືບຕໍ່ຮັກສາອັດຕາແລກປ່ຽນສຳລັບການຊື້ ຫຼື ຂາຍສະກຸນເງິນກີບກັບເງິນໂດລາສະຫະລັດ ໃນຂອບບໍ່ເກີນ ±6.50% ທຽບໃສ່ອັດຕາແລກປ່ຽນອ້າງອີງທີ່ກຳມະໂຍບາຍເງິນຕາປະກາດອອກໃນແຕ່ລະວັນ.
- ກຳນົດໃຫ້ສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍ ບໍ່ເກີນ 2% ສຳລັບການແລກປ່ຽນເງິນກີບກັບເງິນບາດ ເງິນຢວນ, ເງິນເອີໂຣ, ເງິນເຢນ ແລະ ເງິນປອນອັງກິດ. ກຳນົດສ່ວນຕ່າງລະຫວ່າງອັດຕາຊື້ ແລະ ອັດຕາຂາຍບໍ່ເກີນ 5% ສຳລັບການແລກປ່ຽນເງິນກີບກັບສະກຸນອື່ນໆ[2]. *ອີງຕາມ ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາແລກປ່ຽນ ສະບັບເລກທີ 191/ທຫລ, ລົງວັນທີ 06/03/2025.*
- ອັດຕາແລກປ່ຽນທີ່ວລະບົບທະນາຄານສຳລັບເງິນໂດລາສະເລ່ຍ 3 ເດືອນຕົ້ນປີ 2026 ແມ່ນ 21,572 ກີບ/ໂດລາ, ໃນຂະນະທີ່ອັດຕາແລກປ່ຽນນອກລະບົບສະເລ່ຍ 21,738 ກີບ/ໂດລາ. ສຳລັບອັດຕາແລກປ່ຽນເງິນບາດທີ່ວລະບົບທະນາຄານສະເລ່ຍ 680 ກີບ/ບາດ, ໃນຂະນະທີ່ອັດຕາແລກປ່ຽນນອກລະບົບສະເລ່ຍ 684 ກີບ/ບາດ (ຂໍ້ມູນຈາກທະນາຄານແຫ່ງ ສປປ ລາວ)[3].

[2] https://www.bol.gov.la/decisions
[3] https://www.bol.gov.la/exchang_rate_all

2. ການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ໃນໄລຍະໄຕມາດ 1 ປີ 2026 ທຄຕລ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງຕົນ ຈຳນວນ 1 ຄັ້ງ, ຈັດກອງປະຊຸມສະພາບໍລິຫານ ທຄຕລ ຈຳນວນ 2 ຄັ້ງ (ສະໄໝສາມັນ 1 ຄັ້ງ ແລະ ວິສາມັນ 1 ຄັ້ງ). ພ້ອມນີ້ ທຄຕລ ກໍໄດ້ຮັບຮອງ ແຜນທຸລະກິດ ທຄຕລ (ກ່ອນກອງປະຊຸມຜູ້ຖືຮຸ້ນ) ແລະ ແຜນພັດທະນາພະນັກງານ ປະຈຳປີ 2026 ລວມທັງ ການຍ້ອງຍໍ ແລະ ມອບລາງວັນຜົນງານການປະຕິບັດວຽກງານ KPI ປະຈຳປີ 2025 ຂອງສາຂາ ທີ່ວລະບົບ. ນອກຈາກນີ້, ທຄຕລ ໄດ້ເປີດໂຕໃຫ້ບໍລິການໃຫ້ລູກຄ້າສາມາດເປີດບັນຊີເງິນຝາກອອນລາຍດ້ວຍຕົວເອງໄດ້ໃນ BCEL One; ເປີດເຜີຍຂໍ້ມູນ ລິງເວັບໄຊທ໌ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ທຄຕລ 15 ສະບັບ.

- **ດ້ານການພັດທະນາລະບົບ ແລະ ຜະລິດຕະພັນ:** ຍົກລະດັບຄວາມປອດໄພຂອງ BCEL One ເພື່ອປ້ອງກັນການໂຈມຕີຈາກ Scammer (Red first, Red Confidence); ພັດທະນາ EzyKip module KYC; ປັບປຸງ ແລະ ພັດທະນາໂມດູນການສະເໜີຂໍວັດຖຸເຕັກນິກ.
- **ດ້ານການຮ່ວມມືກັບພາກສ່ວນຕ່າງໆ:** ເຊັນສັນຍາວ່າດ້ວຍການໃຫ້ບໍລິການຊຳລະຄ່າຜ່ານທາງດ້ວຍລະບົບທີ່ທັນສະໄໝ ລະຫວ່າງ ທຄຕລ ແລະ ບໍລິສັດ ພັດທະນາສາມຫຼ່ຽມເສດຖະກິດຄົບວົງຈອນ ຈຳກັດຜູ້ດຽວ; ເຊັນສັນຍາ Bill payment ວ່າດ້ວຍການເຊື່ອມຕໍ່ລະບົບການຊຳລະຄ່ານ້ຳປະປານະຄອນຫຼວງຜ່ານລະບົບ ທຄຕລ ກັບ ທະນາຄານ ລາວ-ຝຣັ່ງ ຈຳກັດ ແລະ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ບີເອັນເຄ ຈຳກັດ. ສຳພາດພິເສດ

ຮອງອຳນວຍການ ກ່ຽວກັບຜົນງານການເຄື່ອນໄຫວ ແລະ ທິດທາງການພັດທະນາຂອງທະນາຄານ ພາຍໃຕ້ການຊີ້ນຳ-ນຳພາ ຂອງພັກ-ລັດ ທາງໂທລະພາບກອງທັບປະຊາຊົນລາວ

- **ດ້ານວຽກງານການຕະຫຼາດ:** ກິດຈະກຳຂອງໂຄງການ Master Campaign; ຮ່ວມກັບ NTP ຊ່ວຍເຫຼືອສັງຄົມ ແຈກຟຣີ " ປົ່ງນ້ຳມັນ " ໃຫ້ແກ່ລົດຈັກ ຈຳນວນ 2,000 ຄັນ; ໂຄງການສ້າງຄວາມເຊື່ອໝັ້ນ ແລະ ທັນສະໄໝ Red First ແດງໝັ້ນໃຈ; ເປີດບັນຊີອອນລາຍໄດ້ດ້ວຍຕົວເອງຜ່ານ BCEL One; ໂຄງການສົ່ງເສີມການນຳໃຊ້ບັດ MasterCard, ບັດສາກົນອື່ນໆ ແລະ ໂຄງການສົ່ງເສີມການນຳໃຊ້ OnePayLucky egg ໃຊ້ດີມີລາງວັນ. ພ້ອມນີ້, ທຄຕລ ກໍໄດ້ເປີດໂຄງການຊ່ວຍເຫຼືອຜີ່ນ້ອງຜູ້ປະສົບໄພພາຍຸລະດູຮ້ອນຜ່ານ BCEL OneHeart ຢູ່ນະຄອນຫຼວງວຽງຈັນ ຈາກເຫດການພາຍຸ ແລະ ຝົນໝາກເຫັບຕົກໜັກ ໄດ້ທັງໝົດ 102,086,043.63 ກີບ.
- **ລາງວັນອັນຊົງກຽດທີ່ໄດ້ຮັບ:** ທ່ານ ຜູ້ອຳນວຍການ ທຄຕລ ເຂົ້າຮ່ວມຮັບລາງວັນ ຜູ້ບໍລິຫານຍິງດີເດັ່ນ (ສາຂາທະນາຄານ ປະຈຳປີ 2025) ຈາກອົງກອນ Women's Tabloid ທີ່ນະຄອນດູໄບ, United Arab Emirates; ລາງວັນດີເດັ່ນ ປະເພດ I ທີ່ມີຜົນງານ ແລະ ຄຸນນະພາບໃຫ້ບໍລິການ ປະຈຳປີ 2025 ຈາກ ບໍລິສັດ LAPNet.

3. ຂໍ້ມູນທາງດ້ານການເງິນທີ່ສຳຄັນຂອງ ທຄຕລ

ຮອດໄຕມາດ 1/2026 ທຄຕລ ມີຕົວເລກຜົນການດຳເນີນທຸລະກິດ ດັ່ງລຸ່ມນີ້:

- **ຍອດຊັບສິນ: 164,133.63** ຕື້ກີບ, ທຽບໃສ່ແຜນການປີ **2026** ປະຕິບັດໄດ້ **94.60%** ທຽບໃສ່ທ້າຍປີ **2025** ເພີ່ມຂຶ້ນ **2.10%;**
- **ຍອດເງິນກູ້ທັ້ງໝົດ: 65,088.56** ຕື້ກີບ, ທຽບໃສ່ແຜນການປີ **2026** ປະຕິບັດໄດ້ **101.70%** ທຽບໃສ່ທ້າຍປີ **2025** ຫຼຸດລົງ **-6.37%**;
- **ອັດຕາສ່ວນ NPL: 2.53%;**
- **ຍອດເງິນຝາກ: 153,582.95** ຕື້ກີບ, ທຽບໃສ່ແຜນການປີ **2026** ປະຕິບັດໄດ້ **95.39%** ທຽບໃສ່ທ້າຍປີ 2025 ເພີ່ມຂຶ້ນ **1.81%**;
- **ກຳໄລສຸດທິ ຫຼັງອາກອນ: 328.83** ຕື້ກີບ, ທຽບໃສ່ແຜນການປີ **2026** ປະຕິບັດໄດ້ **30.73%** ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ **121.56%.**

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ມີນາ 2026 ທະນາຄານມີ 01 ສຳນັກງານໃຫຍ່, 7 ບໍລິສັດຮ່ວມທຶນ, 21 ສາຂາ, 101 ໜ່ວຍບໍລິການ ແລະ 9 ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

- **ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ**
  - ເບີໂທ (+856-21) 213200 ຫຼື ໂທ 1555
  - ແຟັກ (+856-21) 213202
  - ອີເມວ: bcelhqv@bcel.com.la
  - ເວັບໄຊ: www.bcel.com.la

- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ.

ທະນາຄານການຄ້າຕ່າງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ມາຮອດວັນທີ 15 ກໍລະກົດ 2011, ກະຊວງການເງິນ ໄດ້ຂາຍຮຸ້ນສາມັນ 10% (ທຽບເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ Compagnie Financière de la BRED (COFIBRED) ຊຶ່ງເປັນບໍລິສັດໃນເຄືອຂອງ BRED ຊຶ່ງເປັນທະນາຄານທີ່ໃຫຍ່ທີ່ສຸດໃນພາກພື້ນຂອງສະມາຄົມທະນາຄານ ພາຍໃຕ້ກຸ່ມຂອງ Banque Populare Group ເຊິ່ງເປັນກຸ່ມຮ່ວມມືຂອງທະນາຄານຂອງປະເທດຝຣັ່ງ.

ໃນປີ 2017 ທຄຕລ ໄດ້ມີການເພີ່ມທຶນ ໂດຍການສະເໜີຂາຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ໃຫ້ແກ່ສາທາລະນະຊົນໃນຕະຫຼາດຫຼັກຊັບລາວ ຕາມການອະນຸຍາດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 17 ສິງຫາ 2017 ຊຶ່ງສາມາດເພີ່ມທຶນຈົດທະບຽນໄດ້ຕື່ມຈຳນວນ 355,728,500,000 ກີບ (71,145,700 ຮຸ້ນ) ຕາມໃບຢັ້ງຢືນຂອງຕະຫຼາດຫຼັກຊັບລາວ ສະບັບເລກທີ 01 /ຕລຊລ, ລົງວັນທີ 15 ກັນຍາ 2017. ດັ່ງນັ້ນ, ທຶນຈົດທະບຽນຂອງ ທຄຕລ ຈຶ່ງໄດ້ເພີ່ມຂຶ້ນຈາກເດີມ 682,888 ລ້ານກີບ ມາເປັນ 1,038,617 ລ້ານກີບ.

ເພື່ອສືບຕໍ່ພັດທະນາ ທຄຕລ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນຄົງ ລັດຖະບານຈຶ່ງໄດ້ເປີດໂອກາດໃຫ້ມວນຊົນ ແລະ ນັກລົງທຶນທົ່ວໄປ ສາມາດຮ່ວມເປັນເຈົ້າຂອງ ທຄຕລ ໃຫ້ຫຼາຍຂຶ້ນດ້ວຍການຫຼຸດສັດສ່ວນການຖືຮຸ້ນຢູ່ ທຄຕລ ລົງ ເພື່ອສະເໜີຂາຍຮຸ້ນດັ່ງກ່າວໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ ເຊິ່ງໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອະນຸມັດການຫຼຸດສັດສ່ວນຮຸ້ນດັ່ງກ່າວ ແລະ ອີງຕາມການຢັ້ງຢືນຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນວັນທີ 29 ພະຈິກ 2019 ໄດ້ຢັ້ງຢືນວ່າ ທຄຕລ ໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງ ທຄຕລ.

ໃນວັນທີ 18 ກຸມພາ 2025 ຕະຫຼາດຫຼັກຊັບລາວໄດ້ອະນຸມັດ ການປ່ຽນແປງມູນຄ່າກຳນົດຮຸ້ນ ຫຼື ມູນຄ່າ ໜ້າຮຸ້ນ (Par Value) ຂອງ ທຄຕລ ໂດຍການແຕກຮຸ້ນອອກ (Stock Split) ຕາມອັດຕາສ່ວນ 1/5 ໝາຍຄວາມວ່າ ຈາກເດີມລາຄາ 5,000 ກີບ/ຮຸ້ນ ເປັນລາຄາ 1,000 ກີບ/ຮຸ້ນ, ເຮັດໃຫ້ຈຳນວນຮຸ້ນຂອງ ທຄຕລ ເພີ່ມຂຶ້ນຈາກເດີມ 207,723,300 ຮຸ້ນ ເປັນ 1,038,616,500 ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມເພື່ອເພີ່ມສະພາບຄ່ອງຂອງການຊື້-ຂາຍຮຸ້ນຂອງ ທຄຕລ ໃນຕະຫຼາດຫຼັກຊັບລາວ ແລະ ເພື່ອເຮັດໃຫ້ນັກລົງທຶນສາມາດເຂົ້າເຖິງຮຸ້ນຂອງ ທຄຕລ ໄດ້ຫຼາຍຂຶ້ນ ດ້ວຍລາຄາທີ່ຖືກລົງ ແຕ່ໃນຂະນະດຽວກັນມູນຄ່າຫຼັກຊັບຕາມລາຄາຕະຫຼາດຍັງຄົງເດີມ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ.

ໃນວັນທີ 27 ສິງຫາ 2025 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອອກໃບອະນຸຍາດໃຫ້ ທຄຕລ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ເປັນຈຳນວນຮຸ້ນ 506,255,500 ຮຸ້ນ ໃນລາຄາ 1,640 ກີບ/ຮຸ້ນ ສຳລັບຜູ້ຖືຮຸ້ນເດີມ 1,730 ກີບ/ຮຸ້ນ ສຳລັບມວນຊົນທົ່ວໄປ ແລະ ໃນວັນທີ 28 ຕຸລາ 2025 ທຄຕລ ສາມາດອອກຈຳໜ່າຍຮຸ້ນສຳເລັດ ເຊິ່ງໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດ້ວຍມູນຄ່າລະດົມທຶນ 841,911,622,580 ກີບ ເຮັດໃຫ້ທຶນຈົດທະບຽນເພີ່ມຂຶ້ນ ຈຳນວນ 506,255,500,000 ກີບ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60%, ນັກລົງທຶນພາຍໃນ ແລະ ນັກລົງທຶນຕ່າງປະເທດຖືຮຸ້ນ 30% ແລະ ຄູ່ຮ່ວມຮຸ້ນທາງຍຸດທະສາດຖືຮຸ້ນ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ທົ່ວ

ໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍວັດຖຸມີຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບ ເປັນຕົ້ນ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ມີນາ 2026 ແມ່ນ 1,544,872 ລ້ານກີບ (ປ່ຽນແປງຈາກ 1,038,616 ລ້ານກີບ ວັນທີ 30 ກັນຍາ 2025).

IV. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ:

ສະມາຊິກສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 31 ມີນາ 2026 ປະກອບ ມີ 8 ທ່ານ:

ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ສຸລິວັດ ສຸວັນນະຈຸມຄຳ	ປະທານສະພາບໍລິຫານ	ແຕ່ງຕັ້ງວັນທີ **30 ເມສາ 2025**
ທ່ານ ນ. ບຸນຕາ ດາຣາວີ	ຮອງປະທານສະພາບໍລິຫານ, ກຳມະການອິດສະລະ,	ແຕ່ງຕັ້ງວັນທີ **05 ກັນຍາ 2025**
ທ່ານ ນ. ສາຍສະໝອນ ຈັນທະຈັກ	ກຳມະການ	ແຕ່ງຕັ້ງວັນທີ **22 ພະຈິກ 2022**
ທ່ານ ມິກາແອລ ເດີ ແຊກ	ກຳມະການ	ແຕ່ງຕັ້ງວັນທີ **05 ກັນຍາ 2025**
ທ່ານ ປະສົມພັດ ຄຳຕັນ	ກຳມະການ	ແຕ່ງຕັ້ງວັນທີ **03 ສິງຫາ 2021**
ທ່ານ ຣສ ທອງພັດ ຈັນທະນີວົງ	ກຳມະການອິດສະລະ	ແຕ່ງຕັ້ງວັນທີ **03 ສິງຫາ 2021**
ທ່ານ ນ. ລັດດາວັນ ຊົງວິໄລ	ກຳມະການອິດສະລະ	ແຕ່ງຕັ້ງວັນທີ **03 ສິງຫາ 2021**
ທ່ານ ສອນໄຊ ສີລາພັດ	ກຳມະການອິດສະລະ	ແຕ່ງຕັ້ງວັນທີ **03 ສິງຫາ 2021**

ໝາຍເຫດ: ໂຄງຮ່າງການຈັດຕັ້ງ ແລະ ຊີວະປະຫວັດໃນເອກະສານຊ້ອນທ້າຍ

2. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງຄະນະອຳນວຍການ

2.1 ຄະນະອຳນວຍການ:

ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 31 ມີນາ 2026 ປະກອບມີ 7 ທ່ານ:

ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ສິງຫາ 2022
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ສາຍຈິດ ສົມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ນ. ພູແສງທອງ ອານຸລັກຄຳ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024
ທ່ານ ນາລິນ ສີລະວົງສິດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ກໍລະກົດ 2024

ໝາຍເຫດ: ໂຄງຮ່າງການຈັດຕັ້ງ ແລະ ຊີວະປະຫວັດໃນເອກະສານຊ້ອນທ້າຍ

3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.1 ກອງປະຊຸມສະພາບໍລິຫານ

ໃນໄລຍະ 03 ເດືອນ 2026, ສະພາບໍລິຫານ ທຄຕລ ໄດ້ດຳເນີນກອງປະຊຸມ ຈຳນວນ 02 ຄັ້ງ (ສະໄໝສາມັນ 01 ຄັ້ງ ແລະ ສະໄໝວິສາມັນ ຈຳນວນ 01 ຄັ້ງ), ເຊິ່ງໄດ້ຮັບຮອງບັນຫາທີ່ສຳຄັນຕ່າງໆ ດັ່ງນີ້:

1) ຮັບຊາບລາຍງານການເຄື່ອນໄຫວດຳເນີນທຸລະກິດປະຈຳປີ 2025;
2) ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2026 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
3) ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາປະຈຳປີ 2025;
4) ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານບາເຊ II ໃນໄຕມາດທີ 4/2025 ແລະ ປະຈຳປີ 2025;
5) ຮັບຮອງແຜນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ທຄຕລ ປະຈຳປີ 2025
6) ຮັບຮອງຜົນການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2025;
7) ຮັບຮອງແບບຟອມ ແລະ ວິທີການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການ ຂອງສະພາບໍລິຫານ ປະຈຳປີ 2026;
8) ຮັບຮອງດ້ານຫຼັກການ ກ່ຽວກັບການປັບປຸງກົດລະບຽບຂອງ ທຄຕລ;
9) ຮັບຮອງການສະເໜີກູ້ຢືມຂອງລູກຄ້າສິນເຊື່ອ ຈຳນວນ 4 ລາຍການ ທີ່ຂຶ້ນກັບສິດຂອງສະພາບໍລິຫານ;
10) ຮັບຮອງການສະເໜີກູ້ຢືມຂອງລູກຄ້າບໍລິສັດຈຳນວນ 03 ລາຍການ ທີ່ຂຶ້ນກັບສິດຂອງສະພາບໍລິຫານ;

3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ຕິດຕາມວຽກງານຄຸ້ມຄອງຄວາມສ່ຽງ ແລະ ຕິດຕາມບັນດາໂຄງການບາເຊ II ທີ່ ທຄຕລ ພວມຈັດຕັ້ງປະຕິບັດໃຫ້ສຳເລັດ. ຄະນະກຳມະການໄດ້ມີການເປີດກອງປະຊຸມເພື່ອພິຈາລະນາວຽກງານ ຕາມຂອບເຂດສິດຂອງຕົນ ຈຳນວນ 01 ຄັ້ງຄື: ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານບາເຊ II ຂອງ ທຄຕລ ໃນໄຕມາດ 4/2025.

3.3 ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄະນະກຳມະການໄດ້ເອົາໃຈໃສ່ຄົ້ນຄວ້າພິຈາລະນາເປົ້າໝາຍກຳລັງຄົນສຳລັບການປັບປຸງຕຳແໜ່ງງານ ແລະ ພະນັກງານ ທຄຕລ ໃນແຕ່ລະໄລຍະຢ່າງຕໍ່ເນື່ອງ. ໂດຍສະເພາະໃນໄລຍະ 03 ເດືອນຕົ້ນປີ 2026, ຄະນະກຳມະການ ໄດ້ຄົ້ນຄວ້າພິຈາລະນາການສະເໜີແຕ່ງຕັ້ງ ແລະ ສັບຊ້ອນຕຳແໜ່ງງານຈຳນວນ 1 ຄັ້ງ ເຊິ່ງໃນນັ້ນໄດ້ດຳເນີນການ ພິຈາລະນາແຕ່ງຕັ້ງ ແລະ ສັບຊ້ອນຕຳແໜ່ງງານໃຫ້ແກ່ພະນັກງານຈຳນວນໜຶ່ງ.

3.4 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານໄດ້ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ໃຫ້ທິດທາງຊີ້ນຳຕໍ່ການດຳເນີນທຸລະກິດ ຂອງ ທຄຕລ ຢ່າງໃກ້ຊິດ ແລະ ເປັນປົກກະຕິ. ໃນໄລຍະ 3 ເດືອນຕົ້ນປີ 2026, ຄະນະກຳມະການໄດ້ເປີດກອງປະຊຸມ ຈຳນວນ 1 ຄັ້ງ ໂດຍປະຊຸມຮ່ວມກັບກອງປະຊຸມສະໄໝສາມັນ ເຊິ່ງມີວາລະສຳຄັນດັ່ງນີ້:

- ຮັບຊາບລາຍງານຜົນການເຄື່ອນໄຫວດຳເນີນທຸລະກິດປະຈຳປີ 2025;
- ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2026 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຊາບລາຍງານຜົນການຈັດຕັ້ງປະຕິບັດວຽກງານກວດກາປະຈຳປີ 2025;

- ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານ Basel II ໃນໄຕມາດທີ 4 ປີ 2025 ແລະ ພາບລວມປະຈຳປີ 2025.

3.5 ຄະນະກຳມະການກວດສອບ

ຄະນະກຳມະການກວດສອບ ໄດ້ເອົາໃຈໃສ່ຕິດຕາມ ແລະ ຊີ້ນຳວຽກງານກວດສອບພາຍໃນ ຂອງ ທຄຕລ ຢ່າງເປັນປະຈຳ. ໃນໄລຍະ 03 ເດືອນປີ 2026 ຄະນະກຳມະການໄດ້ປະຊຸມປຶກສາຫາລື ວຽກງານຕາມພາລະບົດບາດ ເຊິ່ງໄດ້ຮັບຮອງບາງເນື້ອໃນສຳຄັນດັ່ງນີ້:

- ຮັບຊາບການລາຍງານວຽກງານກວດກາພາຍໃນ ທຄຕລ ແລະ ການຕິດຕາມການແກ້ໄຂຂໍ້ຜິບເຫັນ ປະຈຳປີ 2025;
- ເຫັນດີຮັບຮອງເອົາການປັບປຸງ TOR ສຳລັບການກວດສອບເອກະສານລາຍງານການເງິນ ນັບແຕ່ປີ 2026 ເປັນຕົ້ນໄປດັ່ງນີ້: ① ເຫັນດີໃຫ້ມີການປະມູນຄັດເລືອກເອົາ ແລະ ເຊັນສັນຍາກັບຜູ້ກວດສອບ ສຳລັບ 03 ປີ ຄື: 2026, 2027 ແລະ 2028 ເພື່ອເຮັດໃຫ້ການກວດສອບເອກະສານລາຍງານການເງິນຂອງ ທຄຕລ ມີຄວາມຕໍ່ເນື່ອງ. ② ນັບແຕ່ປີ 2026 ເປັນຕົ້ນໄປ ທຄຕລ ຈະໂຈະການສ້າງ 3 ບົດລາຍງານ ຄື: ບົດລາຍງານທົບທວນຄືນເອກະສານລາຍງານການເງິນ ຕາມມາດຕະຖານລາວ (LAS) ປະຈຳ 6 ເດືອນຕົ້ນປີ; ບົດລາຍງານທົບທວນຄືນຜົນການດຳເນີນງານ (Operational reviewed report) ປະຈຳປີ; ແລະ ບົດລາຍງານທົບທວນຄືນຖານະເງິນກູ້ (Loan reviewed report) ປະຈຳປີ.

V. ຄວາມຮັບຜິດຊອບໃນສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ການປະຕິບັດວຽກງານດ້ານຕ່າງໆ, ຄະນະຜູ້ບໍລິຫານ ແລະ ພະນັກງານ ຂອງ ທຄຕລ ທຸກຄົນໄດ້ມຸ່ງໝັ້ນປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility - CSR) ໂດຍໄດ້ນຳໃຊ້ທ່າແຮງດ້ານເທັກໂນໂລຢີ ແລະ ນະວັດຕະກຳທີ່ທັນສະໄໝ ມາປະຍຸກໃຊ້ເຂົ້າໃນວຽກງານການຊ່ວຍເຫຼືອສັງຄົມຢ່າງບໍ່ຫວັງຜົນຕອບແທນ.

ໝາກຜົນອັນໂດດເດັ່ນຂອງຄວາມມຸ່ງໝັ້ນດັ່ງກ່າວ ສະທ້ອນອອກມາເປັນຮູບປະທຳໃນຜະລິດຕະພັນ "BCEL One Heart" ເຊິ່ງເປັນເຄື່ອງມືດິຈິຕອນທີ່ເຮັດໜ້າທີ່ເປັນສື່ກາງເຊື່ອມຕໍ່ລະຫວ່າງ ຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໝັກໃຈບໍລິຈາກ ໄດ້ຢ່າງມີປະສິດທິພາບ. BCEL One Heart ໂດດເດັ່ນດ້ວຍຄຸນສົມບັດທີ່ຄົບຖ້ວນ ທັງໃຊ້ງ່າຍ, ສະດວກ ແລະ ວ່ອງໄວ ພ້ອມທັງມີລະບົບຄວາມໂປ່ງໃສທີ່ສາມາດກວດສອບຂໍ້ມູນການຮັບ-ມອບເງິນບໍລິຈາກໄດ້ທຸກຂັ້ນຕອນ ສ້າງຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈໃຫ້ແກ່ທັງຜູ້ໃຫ້ ແລະ ຜູ້ຮັບໄດ້ຢ່າງແທ້ຈິງ.

ມາຮອດໄລຍະ 3 ເດືອນຕົ້ນປີ 2026, ຜະລິດຕະພັນ BCEL One Heart ໄດ້ສະແດງໃຫ້ເຫັນເຖິງພະລັງຂອງການຊ່ວຍເຫຼືອສັງຄົມຜ່ານເທັກໂນໂລຢີ ໂດຍມີ 12 ໂຄງການ ທີ່ກຳລັງເປີດຮັບການຊ່ວຍເຫຼືອຢ່າງຕໍ່ເນື່ອງ, ສາມາດລະດົມທຶນບໍລິຈາກໄດ້ລວມທັງໝົດ ກວ່າ 339 ລ້ານກີບ ຈາກ ກວ່າ 2,868 ຄັ້ງ ຂອງການບໍລິຈາກ ສະທ້ອນໃຫ້ເຫັນເຖິງການຕອບຮັບທີ່ດີຈາກສັງຄົມ ແລະ ຄວາມເຊື່ອໝັ້ນຂອງປະຊາຊົນທີ່ມີຕໍ່ລະບົບ.

ນອກຈາກນັ້ນ, ທຄຕລ ຍັງໄດ້ປະກອບສ່ວນຊ່ວຍເຫຼືອ ແລະ ຊຸກຍູ້ສັງຄົມໂດຍກົງໃນຫຼາຍຮູບການ ທັງການອຸປະຖຳວຽກງານການສຶກສາ ແລະ ກິລາ, ສະໜັບສະໜຸນວຽກງານສາທາລະນະສຸກ, ໃຫ້ການຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ເຊັ່ນດຽວກັນກັບການຊຸກຍູ້ວັນບຸນສຳຄັນຕ່າງໆ ຂອງຊາດ ແລະ ອື່ນໆ ທັງໃນຮູບແບບເງິນສົດ ແລະ ວັດຖຸອຸປະກອນ ຕາມການສະເໜີຈາກທັງພາກລັດ ແລະ ເອກະຊົນ ລວມເປັນມູນຄ່າທັງໝົດ ກວ່າ 701 ລ້ານກີບ.

ຜູ້ອຳນວຍການ

ນາລິນ ສິລະວົງສິດ

ເອກະສານຊ້ອນທ້າຍ 01

ຊື່ອະປະຫວັດ ສະພາບໍລິຫານ ທຄຕລ

ສະພາບໍລິຫານ ທຄຕລ (ຊຸດປັດຈຸບັນ)



ທ່ານ ສຸລິວັດ ສຸວັນມະຈູມຄຳ
ປະທານສະພາບໍລິຫານ



ທ່ານ ນ. ບຸນຕາ ດາຣາວີ
ຮອງປະທານສະພາບໍລິຫານ, ກຳມະການອິດສະຫຼະ



ທ່ານ ນ. ສາຍສະໝອນ ຈັນທະຈັກ
ກຳມະການ



ທ່ານ ມິກາແອລ ເດີ ແຄ໋ກ
ກຳມະການ



ທ່ານ ປະສົມເພັດ ຄຳຕັນ
ກຳມະການ



ທ່ານ ຣສ ທອງເພັດ ຈັນທະນິວົງ
ກຳມະການອິດສະຫຼະ



ທ່ານ ນ. ລັດດາວັນ ຊົງວິໄລ
ກຳມະການອິດສະຫຼະ



ທ່ານ ສອນໄຊ ສີລາເພັດ
ກຳມະການອິດສະຫຼະ

www.bcel.com.la

+85621 213200

ເລກທີ 01, ຖະໜົນປາງຄຳ
ບ. ຊຽງຍືນ ມ. ຈັນທະບູລີ ນະຄອນຫຼວງວຽງຈັນ



ທ່ານ ສຸລິວັດ ສຸວັນນະຈູມຄຳ

ປະທານສະພາບໍລິຫານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່
ບ້ານ ຊຽງຍືນ, ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

ປະລິນຍາໂທ ພົວພັນສາກົນດ້ານເສດຖະສາດ ແລະ ການເມືອງ, ມະຫາວິທະຍາໄລ Lodz, LODZ, ປະເທດໂປໂລຍ

ການຝຶກອົບຮົມ

ທິດສະດີ ການເມືອງການປົກຄອງ ຂັ້ນສູງ ທີ່ ສະຖາບັນການເມືອງ ການປົກຄອງແຫ່ງຊາດ

ພາສາຕ່າງປະເທດ

- **ພາສາອັງກິດ**
- **ພາສາໂປໂລຍ**
- **ພາສາໄທ**

ປະສົບການເຮັດວຽກ

- 12/2024-ປັດຈຸບັນ: ຮອງລັດຖະມົນຕີ ກະຊວງການເງິນ
- 07-12/2024: ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
- 2022 – 07/2024: ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ
- 2019-2021: ຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
- 2018-2019: ຮອງຫົວໜ້າກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ
- 2016-2018: ຮອງຫົວໜ້າກົມງົບປະມານ, ກະຊວງການເງິນ
- 2014-2016: ຮອງຫົວໜ້າກົມ, ເລຂາຮອງນາຍົກລັດຖະມົນຕີ, ສຳນັກງານນາຍົກລັດຖະມົນຕີ
- 2013-2014: ຫົວໜ້າພະແນກ, ພະແນກເສດຖະກິດມະຫາພາກ, ກົມນະໂຍບາຍການເງິນ, ກະຊວງການເງິນ
- 2011-2013: ປະຈຳການເປັນທີ່ປຶກສາ ຫົວໜ້າຫ້ອງການຜູ່ຕາງໜ້າກຸ່ມອາຊີ ຕາເວັນອອກສ່ຽງໃຕ້ ຢູ່ສຳນັກງານໃຫຍ່ ທະນາຄານໂລກ, ວໍຊິງຕັນດີຊີ ສະຫະລັດອາເມລິກາ
- 2009-2011: ຮອງຫົວໜ້າພະແນກ, ເລຂາຮອງລັດຖະມົນຕີກະຊວງການເງິນ
- 2007-2009: ເປັນເຈົ້າໜ້າທີ່ອາວຸໂສ, ເລຂາຮອງລັດຖະມົນຕີກະຊວງການເງິນ
- 2004-2007: ເຈົ້າໜ້າທີ່ອາວຸໂສຮັບຜິດຊອບວຽກງານຄຸ້ມຄອງໜີ້ສາທາລະນະ ກົມການເງິນຕ່າງປະເທດ, ກະຊວງການເງິນ
- 2002-2004: ວິຊາການ ຮັບຜິດຊອບດ້ານການຮ່ວມມື ສະຖາບັນການເງິນສາກົນ (IFIs), ພະແນກຮ່ວມມືສາກົນ, ກົມການເງິນຕ່າງປະເທດ, ກະຊວງການເງິນ



ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

ປະລິນຍາໂທ ບໍລິຫານທຸລະກິດ
ໂຄງການຮ່ວມມືລາວ-ຫວຽດນາມ

ການຝຶກອົບຮົມ

ທິດສະດີການເມືອງ-ການປົກຄອງ ຊັ້ນສູງ ລະບົບ 5 ເດືອນ ຮຸ່ນທີ IV ປີ 2008-2009 ທີ່ສະຖາບັນ ການເມືອງ-ການປົກຄອງ ແຫ່ງຊາດ

ພາສາຕ່າງປະເທດ

- **ພາສາອັງກິດ**
- **ພາສາຫວຽດນາມ**

ທ່ານ ນ. ບຸນຕາ ດາຣາວີ

ຮອງປະທານສະພາບໍລິຫານ, ກຳມະການອິດສະຫຼະ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 06/2016-ປັດຈຸບັນ: ພະນັກງານບໍານານ ທະນາຄານແຫ່ງ ສປປ ລາວ;
- 08/2012-06/2016: ຫົວໜ້າກົມຈັດຕັ້ງແລະພະນັກງານ ທະນາຄານແຫ່ງ ສປປ ລາວ;
- 04/2011-08/2012: ຫົວໜ້າກົມກວດກາພາຍໃນ ທະນາຄານແຫ່ງ ສປປ ລາວ;
- 01/2008-04/2011: ຜູ້ອຳນວຍການທະນາຄານພັດທະນາລາວ;
- 2006-01/2008: ຫົວໜ້າກົມເງິນຕາ-ຄັງສາງ ທະນາຄານແຫ່ງ ສປປ ລາວ;
- 03/2003-06/2006: ຜູ້ອຳນວຍການທະນາຄານຮ່ວມທຸລະກິດລາວ-ຫວຽດ;
- 06/1998-03/2003: ຮອງຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ຮັບຜິດຊອບຊີ້ນຳພະແນກສິນເຊື່ອ, ພະແນກໜັງສືສິນເຊື່ອ ແລະ ພະແນກຈັດຕັ້ງ;
- 1987-1998: ຫົວໜ້າພະແນກຄັງສາງ ທະນາຄານການຄ້າຕ່າງປະເທດລາວ;
- 1983-1986: ຫົວໜ້າພະແນກຄຸ້ມຄອງວັດຖຸມີຄ່າ ຢູ່ກົມເງິນຕາ-ຄັງສາງ ທະນາຄານແຫ່ງ ສປປ ລາວ;
- 1982: ຮອງຫົວໜ້າພະແນກຄົ້ນຄວ້າສັງລວມ ຢູ່ຫ້ອງການທະນາຄານແຫ່ງ ສປປ ລາວ;
- 1981: ວິຊາການ ພະແນກຄົ້ນຄວ້າສັງລວມ ຢູ່ຫ້ອງການທະນາຄານແຫ່ງ ສປປ ລາວ.



ທ່ານ ນ. ສາຍສະໝອນ ຈັນທະຈັກ

ຜູ້ອຳນວຍການ, ກຳມະການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 08/2022 – ປັດຈຸບັນ: ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 09/2021 – 08/2022: ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບ ລາວ;
- 2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;
- 04/2010: ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;
- 2009: ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ;
- 1993 – 1997: ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່
ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ, ປະເທດອົດສະຕາລີ (Flinders University, Australia);
- ປະລິນຍາໂທ ສາຂາ ບໍລິຫານ ລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan);
- ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກ ມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ

ການຝຶກອົບຮົມ

ທິດສະດີການເມືອງ-ການປົກຄອງ ຊັ້ນສູງ

ພາສາຕ່າງປະເທດ

- **ພາສາອັງກິດ**
- **ພາສາລັດເຊຍ**



ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ສາຂາ: ການກວດສອບ, ການບໍລິຫານບັນຊີ, ແລະ ລະບົບຂໍ້ມູນຂ່າວສານ ຈາກ SKEMA (ໂຮງຮຽນທຸລະກິດເອີຣົບ ທີ່ຖືກຈັດອັນດັບທີ 56 ໂດຍ The Financial Times) – ນະຄອນປາຣີ, ປະເທດຝຣັ່ງ
- ປະລິນຍາຕີ ວິທະຍາສາດ ສາຂາການບໍລິຫານ ຈາກ California International Business University – ແຊນເດຍໂກ, ສະຫະລັດອາເມຣິກາ

ພາສາຕ່າງປະເທດ

- **ພາສາຝຣັ່ງ**
- **ພາສາອັງກິດ**
- **ພາສາແອດສະປາຍ**
- **ພາສາໄທ**

ທ່ານ ມິກາແອລ ເດີ ແກຼກ

ກຳມະການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- ປີ 2025-ປັດຈຸບັນ: ຜູ້ອຳນວຍການໃຫຍ່ ຂອງ ທະນາຄານ ຝຣັ່ງ-ລາວ (BFL Group BRED);
- ປີ 2021-2024: ຜູ້ອຳນວຍການຝ່າຍການເງິນ ຂອງ ທະນາຄານ ຝຣັ່ງ-ລາວ (BFL Group BRED);
- ປີ 2018-2021: ຜູ້ບໍລິຫານກຸ່ມລູກຄ້າກວດສອບ, ໃຫ້ບໍລິການກວດສອບ ໃຫ້ KPMG – ນະຄອນບາງກອກ, ປະເທດໄທ;
- ປີ 2017-2018: ຜູ້ບໍລິຫານກຸ່ມລູກຄ້າກວດສອບ, ໃຫ້ບໍລິການກວດສອບ ໃຫ້ KPMG – ນະຄອນລອນດອນ, ສະຫະລາຊະອານາຈັກ;
- ປີ 2015-2017: ຜູ້ບໍລິຫານກຸ່ມລູກຄ້າກວດສອບ, ໃຫ້ບໍລິການກວດສອບ ໃຫ້ KPMG – ນະຄອນບາງກອກ, ປະເທດໄທ;
- ປີ 2013-2015: ຜູ້ຮ່ວມກໍ່ຕັ້ງ ແລະ ຜູ້ອຳນວຍການໃຫຍ່ ຂອງ CBR Management Ltd. - ນະຄອນບາງກອກ, ປະເທດໄທ;
- ປີ 2007-2013: ຜູ້ບໍລິຫານກຸ່ມລູກຄ້າກວດສອບ, ໃຫ້ບໍລິການກວດສອບ ໃຫ້ KPMG – ລຸກຊຳບວກ, ປະເທດລຸກຊຳບວກ.



ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທເສດຖະກິດ ທຸລະກິດ ທີ່ວິທະຍາໄລກຸງຮີ, ປະເທດ ສ ເກົາຫຼີ;
- ປະລິນຍາຕີຄຸ້ມຄອງກົນຈັກ ທີ່ ມະຫາວິທະຍາໄລຊັບພະວິຊາ 2 ທັນວາ ສປປ ລາວ.

ພາສາຕ່າງປະເທດ

- **ພາສາອັງກິດ**

ທ່ານ ປະສົມເພັດ ຄຳຕັນ

ກຳມະການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 08/2020 - ປະຈຸບັນ: ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ;
- 2016 - 2020: ຮອງຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ;
- 2013 - 2016: ຫົວໜ້າພະແນກຄຸ້ມຄອງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ, ກົມການເງິນຕ່າງປະເທດ, ກະຊວງການເງິນ;
- 2008 - 2013: ຫົວໜ້າຄຸ້ມຄອງໂຄງການກູ້ຢືມ ແລະ ຊ່ວຍເຫຼືອຫຼ້າ ຈາກທະນາຄານໂລກ ກະຊວງການເງິນ;
- 2007 - 2008: ຮອງຫົວໜ້າພະແນກສະຖິຕິການເງິນ, ກົມນະໂຍບາຍການເງິນ, ກະຊວງການເງິນ;
- 1998 - 2007: ວິຊາການກົມງົບປະມານ, ກະຊວງການເງິນ;
- 1994 - 1998: ວິຊາການກົມເງິນຕາຕ່າງປະເທດ, ກະຊວງການເງິນ.



ທ່ານ ທອງເພັດ ຈັນທະນິວົງ

ກຳມະການອິດສະຫຼະ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະກາດສະນິຍະບັດ ນັກຊ່ຽວຊານບັນຊີລາວ
- ປະລິນຍາໂທ ດ້ານການພົວພັນສາກົນ ຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ;
- ປະລິນຍາໂທ ດ້ານບໍລິຫານທຸລະກິດ ຢູ່ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;

ພາສາຕ່າງປະເທດ

- **ພາສາອັງກິດ**

ປະສົບການເຮັດວຽກ

- 2024-ປັດຈຸບັນ: ພະນັກງານບໍານານ, ປະທານກຳມະການສຶກສາສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- 2018-2023: ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຮັບຜິດຊອບຫຼັກສູດປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ
- 2006: ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006)
- 2018-2024: ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- 2018-2022: ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ
- 2018-2024: ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ
- 2023-2024: ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານການລາຍງານການເງິນ, ການກຳນົດຜັງບັນຊີ ແລະ ເທັກນິກການບັນທຶກບັນຊີວິສາຫະກິດ (ກະຊວງການເງິນ)
- 2018-2024: ເປັນອາຈານສອນຫຼັກສູດມາໆຊາດ ແລະ ປະລິນຍາໂທ ສາຂາບໍລິຫານທຸລະກິດ,ເສດຖະສາດ ຂອງ ມະຫາວິທະຍາໄລ ແຫ່ງຊາດ ແລະ ສະຖາບັນການທະນາຄານ
- 2020-2024: ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ, ປະເທດໄທ
- 2015-2024: ເປັນຄູເຝິກ ມາດຕະຖານການບັນທຶກບັນຊີສາກົນ (IFRS) ແລະ ມາດຖານການກວດສອບສາກົນ (AIS)



ທ່ານ ນ. ລັດດາວັນ ຊົງວິໄລ

ກຳມະການອິດສະຫຼະ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ດ້ານນະໂຍບາຍ ບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ;
- ປະລິນຍາຕີ ດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາ ວິທະຍາໄລແຫ່ງຊາດ;

ພາສາຕ່າງປະເທດ

- **ພາສາອັງກິດ**

ປະສົບການເຮັດວຽກ

- 2020 – ປັດຈຸບັນ: ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດ ເສດຖະກິດ ແລະ ສັງຄົມແຫ່ງຊາດ;
- 2019 – 2020: ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດ ມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດ ແຫ່ງຊາດ;
- 2016 – 2019: ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ;
- 2015 – 2016: ຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
- 2011 – 2015: ຮອງຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດ ແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;
- 2005 – 2011: ຜູ້ຊ່ວຍນັກຄົ້ນຄວ້າ ຢູ່ສະຖາບັນຄົ້ນຄວ້າເສດຖະກິດ ແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.



ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາເອກ ດ້ານການບັນຊີ (PhD Candidate) ມະຫາວິທະຍາໄລ ສີປະທຸມ, ປະເທດໄທ;
- ປະລິນຍາໂທ ດ້ານການເງິນ ຢູ່ ວິທະຍາໄລເທັກໂນໂລຢີສັນຕະພົນ, ປະເທດໄທ;

ພາສາຕ່າງປະເທດ

- **ພາສາອັງກິດ**

ທ່ານ ສອນໄຊ ສີລາເພັດ

ກຳມະການອິດສະຫຼະ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 05/2022 – ປັດຈຸບັນ: ເປັນປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບລາວ;
- 2015 – 05/2022: ເປັນຮອງປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບລາວ;
- 01/2016 – 12/2017: ເປັນປະທານ ASEAN Federation of Accountants (AFA);
- 01/2014 – 12/2015: ເປັນຮອງປະທານ ASEAN Federation of Accountants (AFA);
- 07/2011 – 09/2014: ເປັນຜູ້ອຳນວຍການ Ernst & Young Lao Limited;
- 07/2008 – 06/2011: ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited;
- 08/2007 – 06/2008: ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited;
- 05/2004 – 08/2007: ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd;
- 2002 – 05/2004: ເປັນພະນັກງານກວດສອບອາວຸໂສປະສົບການ PricewaterhouseCoopers (Lao) Ltd;
- 2000 – 2001: ເປັນພະນັກງານກວດສອບອາວຸໂສ PricewaterhouseCoopers (Lao) Ltd;
- 1998 – 1999: ເປັນພະນັກງານຜູ້ຊ່ວຍກວດສອບ PricewaterhouseCoopers (Lao) Ltd.

ເອກະສານຊ້ອນທ້າຍ 02

ຊີ້ອະປະຫວັດ ຄະນະອຳນວຍການ ທຄຕລ

ຄະນະອຳນວຍການ ທຄຕລ

ຊຸດປັດຈຸບັນ



ທ່ານ ນ. ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ



ທ່ານ ນັນທະລາດ ແກ້ວປະເສີດ
ຮອງຜູ້ອຳນວຍການ



ທ່ານ ກົງສັກ ສຸພອນສີ
ຮອງຜູ້ອຳນວຍການ



ທ່ານ ນ. ບົວໄພວັນ ນັນດາວົງ
ຮອງຜູ້ອຳນວຍການ



ທ່ານ ສາຍຈິດ ສິມມະວົງ
ຮອງຜູ້ອຳນວຍການ



ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ



ທ່ານ ນາລິນ ສີລະວົງສິດ
ຮອງຜູ້ອຳນວຍການ



ທ່ານ ນ. ສາຍສະໝອນ ຈັນທະຈັກ

ຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່
ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ, ປະເທດອົດສະຕາລີ (Flinders University, Australia);
- ປະລິນຍາໂທ ສາຂາ ບໍລິຫານ ລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan);
- ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກ ມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ

ການຝຶກອົບຮົມ

ທິດສະດີການເມືອງ-ການປົກຄອງ ຊັ້ນສູງ

ພາສາຕ່າງປະເທດ

- **ພາສາອັງກິດ**
- **ພາສາລັດເຊຍ**

ປະສົບການເຮັດວຽກ

- 08/2022 – ປັດຈຸບັນ: ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 09/2021 – 08/2022: ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບ ລາວ;
- 2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;
- 04/2010: ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;
- 2009: ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ;
- 1993 – 1997: ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ດ້ານນະໂຍບາຍ ການຄ້າສາກົນ ຢູ່ປະເທດ ສະຫະລັດອາເມລິກາ
- ຊັ້ນສູງດ້ານການຄ້າລະຫວ່າງ ປະເທດ ທີ່ວິທະຍາໄລ ວິກຕໍ ເລຍ ປະເທດອົດສະຕາລີ

ພາສາຕ່າງປະເທດ

- **ພາສາອັງກິດ**
- **ພາສາຈີນ**

ທ່ານ ນັນທະລາດ ແກ້ວປະເສີດ

ຮອງຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 2014 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;
- 2012 – 2014: ເປັນຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
- 2010 – 2012: ເປັນຮັກສາການຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
- 2003 – 2007: ເປັນວ່າການຮອງສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
- 2001 – 2003: ເປັນວິຊາການພະແນກເງິນໂອນຕ່າງປະເທດ;
- 2001 – 2001: ເປັນພະນັກງານວິຊາການພະແນກບັນຊີ;
- 2000 – 2001: ເປັນພະນັກງານວິຊາການພະແນກເງິນຝາກ ທຄຕລ ສຳນັກງານໃຫຍ່.



ท่าน ภົງສັກ ສຸພອນສີ

ຮອງຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ບໍລິຫານການເງິນ ຈາກມະຫາວິທະຍາໄລແຫ່ງຊາດ
- ຊັ້ນອານຸປະລິນຍາ ທິດສະດີການເມືອງ-ການປົກຄອງ ຈາກ ໂຮງຮຽນການເມືອງ-ການ ປົກຄອງ ນະຄອນຫລວງ ວຽງຈັນ

ພາສາຕ່າງປະເທດ

- **ພາສາອັງກິດ**

ປະສົບການເຮັດວຽກ

- 2021 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;
- 2018 – 2021: ເປັນຫົວໜ້າພະແນກກວດກາພາຍໃນ ທຄຕລ ສຳນັກ ງານໃຫຍ່;
- 2016-2018: ຮຽນທິດສະດີການເມືອງ-ການປົກຄອງ ຊັ້ນອານຸ ປະລິນຍາຢູ່ໂຮງຮຽນການເມືອງ - ການປົກຄອງ ນະຄອນຫລວງວຽງຈັນ;
- 2014 – 2016: ເປັນຫົວໜ້າ ທຄຕລ ສາຂາ ຫຼວງນ້ຳທາ;
- 2013 – 2014: ເປັນຫົວໜ້າ ທຄຕລ ສາຂາ ຫົວພັນ;
- 2010 – 2013: ວ່າການຫົວໜ້າ ທຄຕລ ສາຂາ ຫົວພັນ;
- 2008 – 2010: ຮອງຫົວໜ້າ ທຄຕລ ສາຂາ ອຸດົມໄຊ;
- 2007 – 2008: ເປັນຫົວໜ້າຂະແໜງບໍລິການ ທຄຕລ ສາຂາ ອຸດົມ ໄຊ;
- 2005 – 2007: ວ່າການຫົວຫນ້າຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ;
- 2001 – 2005: ພະນັກງານວິຊາການຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ;
- 2000 – 2001: ພະນັກງານວິຊາການຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ.



ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ
ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ດ້ານຄຸ້ມຄອງ ເສດຖະກິດ ຢູ່ສະຖາບັນການ ເມືອງ-ການປົກຄອງແຫ່ງຊາດ

ພາສາຕ່າງປະເທດ

- **ພາສາອັງກິດ**

ທ່ານ ນາງ ບົວໄພວັນ ນັນດາວົງ

ຮອງຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 2021 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;
- 1/1/2019 – 2021: ເປັນຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
- 2018 – 2019: ເປັນວ່າການຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
- 2015 – 2018: ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
- 2013 – 2015: ເປັນຮອງຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ;
- 2011 – 2013: ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
- 2009 – 2011: ເປັນວ່າການຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
- 1997 – 2009: ເປັນພະນັກງານວິຊາການພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
- 1994 – 1997: ເປັນພະນັກງານວິຊາການພະແນກຫ້ອງການບໍລິຫານ-ການເງິນ ທຄຕລ;
- 1993 – 1994: ເປັນພະນັກງານວິຊາການໜ່ວຍບໍລິການຕະຫຼາດເຊົ້າ II ທຄຕລ.



ທ່ານ ສາຍຈິດ ສິມມະວົງ

ຮອງຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- 2021 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 08/01/2018: ເປັນຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
- 2014 – 2018: ວ່າການຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
- 2013 – 2014: ຮອງຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
- 2010 – 2013: ຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
- 2007 – 2010: ວ່າການຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
- 2000 – 2006: ຫົວໜ້າໜ່ວຍງານຮຽກເກັບແຊັກ, ພະແນກເງິນໂອນຕ່າງປະເທດ;
- 1999 – 2000: ຫົວໜ້າຫ້ອງແລກປ່ຽນ ຮຸ້ນສ່ວນສີຫອມ, ສູນບໍລິການ;
- 1998 – 1999: ຫົວໜ້າຫ້ອງແລກປ່ຽນຂົວມິດຕະພາບ, ສູນບໍລິການ;
- 1995 – 1998: ພະນັກງານວິຊາການສູນບໍລິການ ທຄຕລ.

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ສາຂາຄຸ້ມຄອງ ເສດຖະກິດ ຈາກສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ

ພາສາຕ່າງປະເທດ

- **ພາສາອັງກິດ**
- **ພາສາຝຣັ່ງ**



ທ່ານ ນ. ພູແສງທອງ ອານຸລັກຄຳ

ຮອງຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ປະສົບການເຮັດວຽກ

- ປັດຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 06/2023 – 06/2024: ເປັນຫົວໜ້າພະແນກຫ້ອງການບໍລິຫານ-ການເງິນ;
- 08/2018 – 06/2023: ເປັນຫົວໜ້າພະແນກບັນຊີສັງລວມ;
- 07/2015 – 08/2018: ເປັນຫົວໜ້າພະແນກກວດກາພາຍໃນ;
- 09/2010 – 07/2015: ເປັນຮອງຫົວໜ້າສູນບໍລິການອີເລັກໂທນິກ ແລະ ຜະລິດຕະພັນບັດ;
- 2009 – 08/2010: ເປັນຮອງຫົວໜ້າສູນໄອທີ;
- 07/2006 – 2009: ເປັນວ່າການຮອງຫົວໜ້າສູນໄອທີ;
- 07/2003 – 07/2006: ວິຊາການພະແນກບັນຊີ;
- 02/2002 – 07/2003: ວິຊາການພະແນກເງິນຝາກ;
- 11/1998 – 02/2002: ວິຊາການພະແນກກວດກາພາຍໃນ;
- 09/1996 – 11/1998: ວິຊາການພະແນກເງິນຝາກ;
- 02/1995 – 09/1996: ວິຊາການພະແນກບັນຊີ.

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ສາຂາການບັນຊີ ການເງິນ ຈາກມະຫາວິທະຍາໄລ ແຫ່ງຊາດ.

ພາສາຕ່າງປະເທດ

- **ພາສາອັງກິດ**



ທ່ານ ນາລິນ ສີລະວົງສິດ

ຮອງຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ຂໍ້ມູນຕິດຕໍ່

ເບີໂທ
021-213200

ອີເມວ
bcelhqv@bcel.com.la

ທີ່ຢູ່

ບ້ານ ຊຽງຍືນ, ເມືອງ ຈັນທະບູລີ ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະ

- ປະລິນຍາໂທ ບໍລິຫານທຸລະກິດ ຈາກມະຫາວິທະຍາໄລວາເຊດ້າ (ປະເທດຍີ່ປຸ່ນ).

ພາສາຕ່າງປະເທດ

- **ພາສາອັງກິດ**

ປະສົບການເຮັດວຽກ

- ປັດຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 07/2023 – 06/2024: ເປັນຮອງກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ;
- 08/2022 – 07/2023: ເປັນຮອງຜູ້ອຳນວຍການ ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ທະນາຄານແຫ່ງ ສປປ ລາວ;
- 05/2021 – 08/2022: ເປັນຮອງຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 2017 – 2021: ເປັນຮອງຜູ້ອຳນວຍການທະນາຄານພັດທະນາລາວ;
- 2014 – 2017: ເປັນຜູ້ອຳນວຍການບໍລິສັດຫຼັກຊັບລ້ານຊ້າງ ມະຫາຊົນ;
- 2014: ປະຈຳການຢູ່ ທະນາຄານພັດທະນາລາວ ສຳນັກງານໃຫຍ່;
- 2012 – 2014: ເປັນຫົວໜ້າສາຂາດົງໂດກ;
- 2008 – 2012: ເປັນຫົວໜ້າພະແນກຄຸ້ມຄອງສິນເຊື່ອ;
- 2006 – 2008: ເປັນວ່າການຫົວໜ້າພະແນກຄຸ້ມຄອງສິນເຊື່ອ, ທຄຕລ;
- 1999 – 2003: ເປັນຫົວໜ້າພະແນກບໍລິການ, ທະນາຄານຮ່ວມທຸລະກິດລາວ-ຫວຽດ;
- 1997 – 1999: ຫົວໜ້າໜ່ວຍບໍລິການຕະຫຼາດເຊົ້າ;
- 1992 – 1997: ວິຊາການ ທຄຕລ ສຳນັກງານໃຫຍ່.

ເອກະສານຊ້ອນທ້າຍ 03

ບົດລາຍງານການເງິນ ໄລຍະ 03 ເດືອນ ປີ 2026

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ເອກະສານລາຍງານການເງິນ ສຳລັບຈຸດປະສົງພິເສດ

ນະອັນທີ ແລະ ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ສາລະບານ

	ໜ້າ
ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດ	1
ໃບລາຍງານຖານະການເງິນສຳລັບຈຸດປະສົງພິເສດ	3
ໃບລາຍງານສ່ວນປ່ຽນແປງຂອງທຶນສຳລັບຈຸດປະສົງພິເສດ	4
ໃບລາຍງານກະແສເງິນສົດສຳລັບຈຸດປະສົງພິເສດ	5 - 6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບຈຸດປະສົງພິເສດ	7 - 32

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

	ຍົກ ອະທິບາຍ ເລກທີ	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ		2,172,241	1,545,428
ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ		(701,926)	(744,294)
ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ	3	**1,470,315**	**801,134**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ		384,805	254,731
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ		(84,471)	(64,851)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	4	**300,334**	**189,880**
ລາຍຮັບສຸດທິຈາກການຊື້-ຂາຍເງິນຕາຕ່າງປະເທດ	5	87,232	80,731
ລາຍຮັບອື່ນໆຈາກການດຳເນີນງານ	6	162,980	35,895
ລາຍຮັບຈາກການດຳເນີນງານ		**2,020,861**	**1,107,640**
ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ	13	(1,366,917)	(657,116)
ຄ່າເສື່ອມມູນຄ່າຈາກການລົງທຶນທາງດ້ານການເງິນ	7	21,093	(11,505)
ລາຍຮັບສຸດທິຈາກການດຳເນີນງານ		**675,036**	**439,019**
ລາຍຈ່າຍພະນັກງານ	8	(159,241)	(159,424)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	17,18	(32,661)	(30,048)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ	19	(6,387)	(4,750)
ລາຍຈ່າຍອື່ນໆຈາກການດຳເນີນງານ	9	(92,942)	(80,526)
ລາຍຈ່າຍທັງໝົດຈາກການດຳເນີນງານ		**(291,231)**	**(274,747)**
ສ່ວນແບ່ງກຳໄລ ແລະ ຂາດທຶນຈາກການລົງທຶນໃນບໍລິສັດຮ່ວມ ທຸລະກິດ ແລະ ບໍລິສັດຮ່ວມທຶນ	16	22,120	13,251
ກຳໄລກ່ອນອາກອນ		**405,926**	**177,523**
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	24	(76,522)	(41,430)
ລາຍຮັບອາກອນກຳໄລເຍື່ອນຊຳລະ	24	(574)	12,324
ກຳໄລສຸດທິພາຍໃນໄລຍະ		**328,830**	**148,416**
ກຳໄລຕໍ່ຮຸ້ນ (ກີບ)	31	**213**	**96**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ
ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2026

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POURLE COMMERCE EXTERIEUR LAO PUBLIC

ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ລາຍຮັບອື່ນໆນອກການທຸລະກິດ	**328,830**	**148,416**
ຂາດທຶນຈາກການປະເມີນມູນຄ່າຄືນຜົນປະໂຫຍດຂອງພະນັກງານ	(237)	15,702
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ	(2,225)	(3,140)
ລາຍຮັບນອກການທຸລະກິດພາຍໃນໄລຍະ, ຫຼັງຫັກອາກອນ	**(2,462)**	**12,562**
ຍອດລວມລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ	**326,367**	**160,978**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວສະຄອນ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກການຕະຫຼາດພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2026

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສຳລັບຈຸດປະສົງພິເສດ
ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

	ບົດອະທິບາຍຊ້ອນທ້າຍ	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ	10	35,636,549	33,121,131
ເງິນຝາກຢູ່ທະນາຄານອື່ນ	11	18,313,437	21,646,309
ເງິນກູ້ໃຫ້ແກ່ລູກຄ້າ	12	61,348,170	64,938,608
ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ	14	86,671	65,580
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ	15	42,715,541	34,531,373
ການລົງທຶນໃນບັນດາບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ	16	853,636	831,516
ຊັບສິນຄົງທີ່ ແລະ ອຸປະກອນ	17	757,117	752,182
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	18	380,358	385,077
ສິດໃນການນຳໃຊ້ຊັບສິນ	19	71,939	76,751
ຊັບສິນອາກອນລ່ວງໜ້າສະສາງ	24	-	52,780
ຊັບສິນອື່ນໆ	20	3,970,210	4,355,528
ລວມຊັບສິນ		**164,133,627**	**160,756,835**
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ	21	5,279,799	6,127,760
ໜີ້ຕ້ອງສົ່ງລູກຄ້າ	22	148,851,201	145,507,532
ເງິນກູ້ຢືມຈາກທະນາຄານອື່ນ	23	3,689,835	3,599,765
ໜີ້ຕ້ອງສົ່ງອາກອນ	24	97,970	101,445
ອາກອນໜີ້ສິນເລື່ອນຊຳລະ	24	38,780	-
ໜີ້ສິນໃນການເຊົ່າ		39,954	44,736
ໜີ້ສິນອື່ນໆ	26	1,210,390	776,269
ລວມໜີ້ສິນ		**159,207,930**	**156,157,507**
ທຶນ			
ທຶນຈົດທະບຽນ	26	1,544,872	1,544,872
ສ່ວນເພີ່ມມູນຄ່າຫຸ້ນ		326,253	326,253
ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ	27	1,598,280	1,598,280
ລາຍການສ້ຽລວມອື່ນ		(11,127)	(8,665)
ກຳໄລສະສົມ		1,467,418	1,138,588
ລວມທຶນ		**4,925,698**	**4,599,328**
ລວມໜີ້ສິນ ແລະ ທຶນ		**164,133,627**	**160,756,835**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວສະຫວນ
ຫົວໜ້າພະແນກບັນຊີສ້ຽລວມ
ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2026

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບຈຸດປະສົງພິເສດ
ສຳລັບໄລຍະສາມເດືອນສິ້ນສຸດ ວັນທີ 31 ມີນາ 2026

	ທຶນຈົດທະບຽນ ລ້ານກີບ	ຄັງສະສົມຕາມລະບຽບການ ລ້ານກີບ	ຄັງຂະຫຍາຍທຸລະກິດ ລ້ານກີບ	ການຕີມູນຄ່າສຳຮອງຜົນປະໂຫຍດຂອງພະນັກງານ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອໃນວັນທີ 01 ມັງກອນ 2026 - ກວດສອບ	**1,544,872**	**1,598,280**	**326,253**	**(8,665)**	**1,138,588**	**4,599,328**
ກຳໄລສຸດທິພາຍໃນປີ	-	-	-	-	328,830	328,830
ການປະເມີນມູນຄ່າຄັງສຳຮອງຜົນປະໂຫຍດຂອງພະນັກງານ	-	-	-	(237)	-	(237)
ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ	-	-	-	(2,225)	-	(2,225)
ຍອດເຫລືອໃນວັນທີ 31 ມີນາ 2026 - ກ່ອນການກວດສອບ	**1,544,872**	**1,598,280**	**326,253**	**(11,127)**	**1,467,418**	**4,925,698**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ
ນະຄອນຫຼວງວຽງຈັນ, ສປປ ລາວ
13 ພຶດສະພາ 2026

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສຳລັບຈຸດປະສົງພິເສດ

ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

ກິດຈະກຳການດຳເນີນງານ	ບົດອະທິບາຍຊ້ອນທ້າຍ	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ກຳໄລກ່ອນອາກອນ		**405,926**	**177,523**
ການດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	17,18	32,660	30,048
ຄ່າຫຼ້ຍຫ້ຽນສິດນຳໃຊ້ຊັບສິນ	19	6,387	4,750
ຄ່າຕັດຈ່າຍ ລາຍຈ່າຍ/ລາຍຮັບ		155,738	-
ລາຍຈ່າຍສຳລັບການຂາດທຶນຈາກຄ່າເສື່ອມ	12	1,366,917	657,116
ສ່ວນປ່ຽນແປງຈາກການຂາດທຶນຄ່າເສື່ອມ ສຳລັບການລົງທຶນໃນຫຼັກຊັບ	14,15	(21,091)	11,505
ສ່ວນແບ່ງກຳໄລຈາກການລົງທຶນໃນບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ ຕາມວິທີສ່ວນໄດ້ສ່ວນເສຍ	16	(22,120)	(13,251)
ລາຍຈ່າຍຜົນປະໂຫຍດຂອງພະນັກງານຫຼັງອອກວຽກ		14,072	15,702
ຂາດທຶນຈາກການຂາຍ/ສະລາງຊັບສິນຄົງທີ່		-	34
ກຳໄລຈາກການຂາຍຊັບສິນປັດຄົງທີ່		31,395	-
ຂາດທຶນຈາກການຕີມູນຄ່າອັດຕາແລກປ່ຽນ		(30,421)	-
ລາຍຮັບດອກເບ້ຍ	3	(2,172,241)	(1,545,428)
ລາຍຈ່າຍດອກເບ້ຍ	3	701,926	744,294
ກະແສເງິນສົດຈາກກຳໄລໃນການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນໃນການດຳເນີນງານ		**469,148**	**82,293**
ສ່ວນປ່ຽນແປງຂອງຊັບສິນໃນການດຳເນີນງານ			
ປ່ຽນແປງສຸດທິໃນຍອດເຫຼືອເງິນຝາກກັບທະນາຄານອື່ນ		(2,300,041)	4,015,052
ປ່ຽນແປງສຸດທິໃນເງິນກູ້ໃຫ້ແກ່ລູກຄ້າ		(6,707,873)	522,328
ປ່ຽນແປງສຸດທິໃນຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ		1,285,758	-
ປ່ຽນແປງສຸດທິໃນຊັບສິນອື່ນໆ		385,432	(1,672,258)
ສ່ວນປ່ຽນແປງຂອງໜີ້ສິນໃນການດຳເນີນງານ			
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ		(847,961)	393,469
ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງລູກຄ້າ		3,458,305	4,650,104
ປ່ຽນແປງສຸດທິໃນເງິນກູ້ຢືມຈາກທະນາຄານອື່ນ		943,099	-
ປ່ຽນແປງສຸດທິໃນໜີ້ສິນອື່ນໆ		4,779,267	10,027,361
ສ່ວນປ່ຽນແປງເງິນສົດຈາກ /(ໃຊ້ໃນ)ການດຳເນີນງານ			
ດອກເບ້ຍຮັບ		2,172,243	1,319,613
ດອກເບ້ຍຈ່າຍ		(701,926)	(762,169)
ອາກອນຊຳລະພາຍໃນໄລຍະ		(79,997)	(101,082)
ກະແສເງິນສົດສຸດທິຈາກ ກິດຈະກຳການດຳເນີນງານ		**2,855,454**	**18,474,711**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສຳລັບຈຸດປະສົງພິເສດ (ຕໍ່)

ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

	ບົດອະທິບາຍຊ້ອນທ້າຍ	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່ ແລະ ຊັບສົມບັດພວມກໍ່ສ້າງ		(58,172)	(146,713)
ການຊື້ຊັບສົມບັດຄົງທີ່ບໍ່ມີຕົວຕົນ		(701)	(4,909)
ຊື້ສິດໃນການນຳໃຊ້ຊັບສິນ		17,821	(8,332)
ຈ່າຍເງິນໃນການລົງທຶນວິສາຫະກິດຂາອຸ້ນ ແລະ ວິສາຫະກິດປະສົມ		-	-
ເງິນລົງທຶນໃນຫຼັກຊັບທີ່ໄດ້ຈ່າຍ		(12,784,200)	(115,809,319)
ເງິນລົງທຶນໃນຫຼັກຊັບທີ່ໄດ້ຮັບ		12,031,787	106,136,556
ກະແສເງິນສົດສຸດທິ (ໃຊ້ໄປ)/ຈາກການກິດຈະກຳການລົງທຶນ		**(793,465)**	**(9,832,717)**
ກິດຈະກຳການຈັດຫາເງິນທຶນ			
ການຊຳລະໜີ້ສິນກູ້ຢືມຈາກທະນາຄານອື່ນ		(922,343)	(281,043)
ເງິນສົດທີ່ໄດ້ຮັບຈາກການກູ້ຢືມ		91,211	162,260
ການຊຳລະໜີ້ສິນຕາມສັນຍາເຊົ່າ		(30,901)	(8,333)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳຈັດຫາເງິນທຶນ		**(862,033)**	**(127,117)**
ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**1,199,956**	**8,514,877**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນໄລຍະ		**38,363,181**	**33,823,667**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍໄລຍະ	28	**39,563,136**	**42,338,544**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ
ນະຄອນຫຼວງວຽງຈັນ, ສປປ ລາວ.
13 ພຶດສະພາ 2026

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກການຕາພາຍໃນ

ອະນຸມັດໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຮອງຜູ້ອຳນວຍການ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນສຳລັບຈຸດປະສົງພິເສດ

ນະວັນທີ ແລະ ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນ ຈົດທະບຽນໃນຢູ່ພາຍໃຕ້ທະນາຄານແຫ່ງ ສປປລາວ (ທຫລ) ແລະ ແມ່ນ ບໍລິສັດມະຫາຊົນ ທີ່ຈົດທະບຽນຢູ່ພາຍໃຕ້ ຕະຫຼາດຫຼັກຊັບລາວ (ຕລຊລ).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີທີ່ຕັ້ງຈົດທະບຽນດັ່ງລຸ່ມນີ້:

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.

ໃນວັນທີ 31 ມີນາ 2026, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ເຈັດ (7) ວິສາຫະກິດທີ່ໄດ້ຮ່ວມລົງທຶນ (ບໍລິສັດຮ່ວມທຶນ), ຊາວເອັດ (21) ສາຂາຫລັກ, ໜຶ່ງຮ້ອຍໜຶ່ງ (101) ໜ່ວຍບໍລິການ ແລະ ເກົ້າ (09) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ

ກິດຈະກຳຫລັກຂອງທະນາຄານ ແມ່ນສະໜອງການບໍລິການດ້ານທະນາຄານ ແລະ ການບໍລິການດ້ານອື່ນໆ ປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ຂາຍຫຼຸດລາຄາຂອງຕາສານຫນີ້
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ

ຂໍ້ມູນທາງການເງິນ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນຢ່າງອື່ນ.

ຂໍ້ມູນທາງການເງິນ ສະບັບນີ້ໄດ້ຮັບການຮັບຮອງຈາກ ຜູ້ອຳນວຍການ ໃນວັນ ທີ 13 ພຶດສະພາ 2026.

2. ພື້ນຖານການບັນຊີ

ຂໍ້ມູນທາງການເງິນໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງທະນາຄານດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນ ເອກະສານລາຍງານການເງິນ ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026. ເອກະສານລາຍງານການເງິນຫຼັກ (ເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສ່ວນລວມ ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນ) ຖືການນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ຂໍ້ມູນທາງການເງິນສະບັບນີ້ ຄວນອ່ານຄຸ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2025.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບ ເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3. ລາຍຮັບສຸດທິຈາກດອກເບ້ຍ

	ກ່ອນການກວດສອບ ວັນທີ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ ວັນທີ 31 ມີນາ 2025 ລ້ານກີບ
ລາຍຮັບດອກເບ້ຍ:		
ເງິນໃຫ້ລູກຄ້າກູ້ຢືມ	1,574,738	887,400
ເງິນຝາກກັບທະນາຄານອື່ນ	143,760	269,500
ເງິນລົງທຶນ - ປະເພດຖືໄວ້ຈົນຄົບກຳນົດ	453,743	388,528
	2,172,241	**1,545,428**
ລາຍຈ່າຍດອກເບ້ຍ:		
ໜີ້ຕ້ອງສົ່ງທະນາຄານອື່ນ	(51,276)	(145,760)
ເງິນຝາກຂອງລູກຄ້າ	(650,650)	(598,534)
	(701,926)	**(744,294)**
ລາຍຮັບສຸດທິຈາກດອກເບ້ຍ	**1,470,315**	**801,134**

4. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

	ກ່ອນການກວດສອບ ວັນທີ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ ວັນທີ 31 ມີນາ 2025 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	280,161	219,868
ກິດຈະກຳດ້ານສິນເຊື່ອ	66,136	3,087
ກິດຈະກຳອື່ນໆ	38,508	31,776
	384,805	**254,731**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	(80,813)	(60,706)
ທຸລະກຳທາງດ້ານການເງິນ	(3,658)	(4,145)
	(84,471)	**(64,851)**
ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການສຸດທິ	**300,334**	**189,880**

5. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ກຳໄລສຸດທິຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	8,075,290	3,149,916
ຂາດທຶນຈາກການຊື້ຂາຍເງິນຕາ ແລະ ການຕີມູນຄ່າລາຍການທີ່ເປັນເງິນ	(7,988,058)	(3,069,186)
	87,232	**80,730**

6. ລາຍຮັບອື່ນຈາກການດຳເນີນງານ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ເກັບຄືນໜີ້ເສຍທີ່ຖືກສະສາງອອກ	162,288	27,146
ອື່ນໆ	692	8,749
	162,980	**35,895**

7. ການ ເພີ່ມ/ຫຼຸດ ຂອງຄ່າເຊື່ອມຈາກການລົງທຶນທາງດ້ານການເງິນ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ຄ່າເສື່ອມມູນຄ່າຈາກການລົງທຶນໃນຫຼັກຊັບເພື່ອຂາຍ	21,093	(11,505)
	21,093	**(11,505)**

8. ລາຍຈ່າຍພະນັກງານ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ເງິນເດືອນ ແລະ ຄ່າແຮງ	58,625	57,268
ເງິນບຳເນັດ ແລະ ເງິນອຸດໜູນອື່ນໆ	94,665	89,189
ຄ່າໃຊ້ຈ່າຍຜົນປະໂຫຍດຫຼັງການຈ້າງງານ	4,483	11,557
ອື່ນໆ	1,467	1,410
	159,241	**159,424**

9. ລາຍຈ່າຍອື່ນໆຈາກການດຳເນີນງານ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ຈ່າຍຄ່າຄຸ້ມຄອງເງິນຝາກໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	35,903	31,807
ຄ່າສ້ອມແປງ ແລະ ບຳລຸງຮັກສາ	12,428	10,318
ເຄື່ອງຂຽນ ແລະ ເຄື່ອງໃຊ້ຫ້ອງການ	8,539	8,381
ຄ່າຝຶກອົບຮົມ, ການປະຊຸມ ແລະ ການສຳມະນາ	5,595	5,142
ໂທລະຄົມມະນາຄົມ	3,940	4,789
ສາທາລະນຸປະໂພກ	3,858	3,201
ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ	3,288	3,107
ຈ່າຍຄ່າປະກັນໄພ	1,977	2,202
ຄ່າກວດສອບ	-	746
ອື່ນໆ	17,413	10,833
	92,942	**80,526**

10. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນສົດໃນຄັງເປັນເງິນກີບ	2,921,802	2,322,101
ເງິນສົດໃນຄັງເປັນເງິນຕາຕ່າງປະເທດ	3,427,586	3,403,589
ຍອດເຫຼືອຢູ່ ທຫລ		
- ເງິນຝາກກະແສລາຍວັນ	15,180,075	13,903,544
- ເງິນແຮຝາກບັງຄັບ (*)	12,439,971	11,521,434
- ເງິນຝາກປະຈຳ	1,667,115	1,970,463
	35,636,549	**33,121,131**

10. ເງິນສິດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ") (ຕໍ່)

ເງິນຝາກຢູ່ກັບທະນາຄານແຫ່ງ ສປປ ລາວ ລວມມີບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ເງິນຝາກປະເພດນີ້ບໍ່ມີດອກເບ້ຍ.

ອີງຕາມລະບຽບການຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາເງິນສິດສຳຮອງຢູ່ກັບ ທຫລ ໃນຮູບແບບຂອງເງິນແຮຝາກບັງຄັບ ເຊິ່ງຖືກຄິດໄລ່ສອງຄັ້ງຕໍ່ເດືອນໃນອັດຕາ 8.00% ສຳລັບເງິນກີບ ແລະ 11.00% ສຳລັບເງິນຕາຕ່າງປະເທດ, (2025: 8.00% ແລະ 11.00%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດໜ້ອຍກວ່າ 12 ເດືອນ. ພາຍໃນປີ ທະນາຄານໄດ້ຮັກສາເງິນແຮຝາກບັງຄັບ ໂດຍສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

ອັດຕາດອກເບ້ຍບັນຊີເງິນຝາກຂອງທະນາຄານທຸລະກິດທີ່ຝາກໄວ້ຢູ່ທະນາຄານແຫ່ງ ສປປ ລາວ ໃນລະຫວ່າງປີມີດັ່ງນີ້:

	31 ມີນາ 2026 % ຕໍ່ປີ	2025 % ຕໍ່ປີ
ເງິນຝາກມີກຳນົດ	0.10% - 4.50%	0.10% - 5.00%

11. ໜີ້ຕ້ອງຮັບຈາກທະນາຄານ

	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**12,724,924**	**15,408,414**
- ເປັນເງິນກີບ	141	42,498
- ເປັນເງິນຕາຕ່າງປະເທດ	12,724,782	15,365,916
ເງິນຝາກມີກຳນົດ	**5,588,513**	**6,237,895**
- ເປັນເງິນກີບ	1,657,618	1,645,000
- ເປັນເງິນຕາຕ່າງປະເທດ	3,930,896	4,592,895
	18,313,437	**21,646,309**

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບທະນາຄານອື່ນພາຍໃນປີ ມີດັ່ງລຸ່ມນີ້:

	31 ມີນາ 2026 % ຕໍ່ປີ	31 ທັນວາ 2025 % ຕໍ່ປີ
ເງິນຝາກກະແສລາຍວັນ	0.05% – 4.38%	0.05% – 4.38%
ເງິນຝາກປະຢັດ	0.07% – 3.25%	0.07% – 3.25%
ເງິນຝາກມີກຳນົດ	3.50% – 10.50%	3.50% – 10.50%

12. ເງິນກູ້ໃຫ້ແກ່ລູກຄ້າ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນກູ້ໃຫ້ແກ່ລູກຄ້າ	65,088,557	69,513,902
ຫັກ: ເງິນຮອສຳລັບການຂາດທຶນຈາກການເສື່ອມຄ່າ	(3,740,386)	(4,575,294)
	61,348,170	**64,938,608**

ອັດຕາດອກເບ້ຍສຳລັບເງິນກູ້ພາຍໃນປີ ມີດັ່ງລຸ່ມນີ້:

	31 ມີນາ 2026 ອັດຕາດອກເບ້ຍ % ຕໍ່ປີ	2025 ອັດຕາດອກເບ້ຍ % ຕໍ່ປີ
ເງິນກູ້ ແລະ ເງິນລ່ວງເປັນສະກຸນເງິນກີບ	3.00% - 17.00%	3.00% - 17.00%
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ	5.80% - 16.00%	5.80% - 16.00%
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ	6.00% - 9.25%	6.00% - 9.25%

ວິເຄາະເງິນກູ້ຕາມສະກຸນເງິນ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນກີບ	25,992,355	25,048,646
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ	26,076,266	30,116,603
ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ	13,019,936	14,348,653
	65,088,557	**69,513,902**

ວິເຄາະເງິນກູ້ຕາມມື້ຄົບກຳນົດເດີມຂອງເງິນກູ້

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນກູ້ໄລຍະສັ້ນ	8,626,972	7,625,070
ເງິນກູ້ໄລຍະກາງ	36,693,240	39,403,491
ເງິນກູ້ໄລຍະຍາວ	19,768,344	22,485,341
	65,088,557	**69,531,902**

	ກ່ອນການກວດສອບ 31 ມີນາ 2026		ກວດສອບ 31 ທັນວາ 2025	
	ລ້ານກີບ	**%**	**ລ້ານກີບ**	**%**
ຂະແໜງອຸດສາຫະກຳ	37,716,634	57.95%	42,420,856	61.02%
ຂະແໜງກໍ່ສ້າງ	10,128,190	15.56%	7,678,948	11.05%
ຂະແໜງປະກອບວັດຖຸເຕັກນິກ	2,079,477	3.19%	2,199,479	3.16%
ຂະແໜງກະສິກຳ ແລະ ປ່າໄມ້	775,577	1.19%	692,438	1.00%
ຂະແໜງການຄ້າ	8,526,523	13.10%	9,982,918	14.36%
ຂະແໜງຂົນສົ່ງໄປສະນີ	181,725	0.28%	116,184	0.17%
ຂະແໜງບໍລິການ	3,968,104	6.10%	4,865,512	7.00%
ຂະແໜງຫັດຖະກຳ	16,843	0.03%	16,386	0.02%
ຂະແໜງອື່ນໆ	1,695,484	2.60%	1,541,181	2.22%
	65,088,557	**100.00%**	**69,513,902**	**100.00%**

13. ເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນໃຫ້ກູ້ຢືມແກ່ລູກຄ້າ

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຂອງເງິນກູ້ໃຫ້ຜູ້ກູ້ຢືມແກ່ລູກຄ້າພາຍໃນທ້າຍປີ ມີດັ່ງລຸ່ມນີ້:

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ຍອດເຫຼືອໃນວັນທີ 1 ມັງກອນ	**4,575,294**	**2,220,822**
ປ່ຽນແປງສຸດທິພາຍໃນປີ	1,366,917	2,869,743
ສະສາງໜີ້ຕ້ອງຮັບທວງຍາກ	(2,160,809)	(530,181)
ສ່ວນຕ່າງຈາກອັດຕາແລກປ່ຽນ	(41,017)	14,910
ຍອດເຫຼືອໃນວັນທີ 31 ມີນາ 2026	**3,740,386**	**4,575,294**

14. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ການປ່ຽນແປງທີ່ມີສາລະສຳຄັນ ຂອງການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ ມີດັ່ງລຸ່ມນີ້:

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ຮຸ້ນຈົດທະບຽນຂອງບໍລິສັດ ພະລິດ-ໄຟຟ້າລາວ ມະຫາຊົນ	181,204	181,204
ຄ່າເສື່ອມສຳລັບການລົງທຶນໃນຫຼັກຊັບ - ປະເພດມີໄວ້ເພື່ອຂາຍ	(94,533)	(115,624)
	86,671	**65,580**

15. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ2025 ລ້ານກີບ
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ	8,170,754	8,121,767
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍທະນາຄານແຫ່ງ ສປປ ລາວ	25,436,221	18,229,184
ມູນຄ່າຕາມວິທີຫຼຸດຕົ້ນທຶນລົງຂອງພັນທະບັດທີ່ອອກໂດຍກະຊວງການເງິນ	9,108,566	8,180,422
	42,715,541	**34,531,373**

15.1 ພັນທະບັດຄັງເງິນທີ່ອອກໂດຍກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ

ໄລຍະເວລາ	ມື້ທີ່ຊື້	ມື້ຄົບກຳນົດ	ສະກຸນເງິນ	ມູນຄ່າໜ້າບັດ	ມູນຄ່າໜ້າບັດ ລ້ານກີບ	ມູນຄ່າຕາມວິທີຫຼຸດຕົ້ນທຶນ ລ້ານກີບ	ອັດຕາດອກເບ້ຍຕໍ່ປີ
1 ປີ	29/04/2025	29/04/2026	ໂດລາ	20,000,000	441,360	450,480	5.00%
1 ປີ	23/09/2025	23/09/2026	ໂດລາ	25,000,000	551,700	552,290	5.00%
1 ປີ	30/01/2026	30/01/2027	ບາດ	500,000,000	334,450	337,143	5.00%
1 ປີ	16/02/2025	16/02/2027	ບາດ	170,000,000	113,713	114,368	5.00%
1 ປີ	29/04/2025	29/04/2026	ບາດ	2,000,000,000	1,337,800	1,365,442	5.00%
1 ປີ	04/07/2025	04/07/2026	ບາດ	2,932,123,000	1,961,297	1,985,035	5.00%
1 ປີ	23/09/2025	23/09/2026	ບາດ	3,000,000,000	2,006,700	2,008,847	5.00%
1 ປີ	22/10/2025	22/10/2026	ບາດ	1,000,000,000	668,900	683,360	5.00%
1 ປີ	23/09/2025	23/09/2026	ຢວນ	200,000,000	641,800	642,487	5.00%
1 ປີ	30/01/2026	30/01/2027	ຢວນ	150,000,000	481,350	4885,226	5.00%
1 ປີ	16/02/2026	16/02/2027	ຢວນ	100,000,000	320,900	322,750	5.00%
1 ປີ	27/02/2026	27/02/2027	ຢວນ	50,000,000	160,4450	161,138	5.00%
					9,020,420	**9,108,566**	

15. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ (ຕໍ່)

15.2 ພັນທະບັດທີ່ອອກໂດຍກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ

- ລາຍລະອຽດຂອງພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	ກ່ອນການກວດສອບ 31 ມີນາ 2026		ກວດສອບ 31 ທັນວາ 2025	
	ມູນຄ່າໜ້າບັດ ລ້ານກີບ	ມູນຄ່າຕາມວິທີຫຼຸດຕົ້ນທຶນ ລ້ານກີບ	ມູນຄ່າໜ້າບັດ ລ້ານກີບ	ມູນຄ່າຕາມວິທີຫຼຸດຕົ້ນທຶນ ລ້ານກີບ
ພາຍໃນ 1 ປີ	15,941,279	15,941,320	12,413,688	12,996,231
1 ຫາ 5 ປີ	12,514,350	12,699,454	9,075,332	8,434,396
ຫຼາຍກວ່າ 5 ປີ	5,167,708	4,966,200	4,920,586	4,973,698
	33,623,337	**33,606,974**	**26,409,606**	**26,404,325**

- ລາຍລະອຽດຂອງດອກເບ້ຍພັນທະບັດອື່ນໆ ຕາມມື້ຄົບກຳນົດຂອງສັນຍາ ມີດັ່ງຕໍ່ໄປນີ້:

	31 ມີນາ 2026	2025
	% ຕໍ່ປີ	% ຕໍ່ປີ
ພາຍໃນ 1 ປີ	4.50% - 9.50%	4.50% - 9.50%
1 ຫາ 5 ປີ	0.10% - 6.50%	0.10% - 6.50%
ຫຼາຍກວ່າ 5 ປີ	4.40% - 7.50%	4.40% - 7.50%

ພັນທະບັດອື່ນໆ ເປັນພັນທະບັດທີ່ອອກໂດຍກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ອອກໃຫ້ ເພື່ອຊຳລະເງິນໃຫ້ກູ້ຢືມທີ່ທະນາຄານໄດ້ປ່ອຍກູ້ໃຫ້ກັບລູກຄ້າທີ່ນຳໄປເຮັດການກໍ່ສ້າງໂຄງການຂອງລັດຖະບານ ແລະ ເພື່ອການຊຳລະເງິນໃຫ້ກູ້ຢືມທີ່ກະຊວງການເງິນ ແລະ ທະນາຄານແຫ່ງ ສປປ ລາວ ຄ້ຳປະກັນໃຫ້.

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການປ່ຽນແປງທີ່ມີສາລະສຳຄັນ ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອໃນວັນທີ 1 ມັງກອນ 2026	**831,516**
ສ່ວນແບ່ງກຳໄລວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	22,120
ຫັກ: ເງິນປັນຜົນທີ່ໄດ້ຮັບໃນໄລຍະ	-
ຍອດເຫຼືອ ໃນວັນທີ 31 ມີນາ 2026	**853,636**

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ (ຕໍ່)

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ ໃນວັນທີ 31 ມີນາ 2026 ມີດັ່ງລຸ່ມນີ້:

	ອັດຕາສ່ວນເງິນລົງທຶນ		ມູນຄ່າຕົ້ນທຶນ		ມູນຄ່າສຸດທິ		ລາຍຮັບເງິນປັນຜົນ	
	31 ມີນາ 2026	31 ທັນວາ 2025	31 ມີນາ 2026	31 ທັນວາ 2025	31 ມີນາ 2026	31 ທັນວາ 2025	31 ມີນາ 2026	31 ທັນວາ 2025
	(%)		ລ້ານກີບ					
ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ	70	70	70,000	70,000	87,920	85,425	-	(4,242)
ທະນາຄານຮ່ວມທຸລະກິດລາວ-ຫວຽດ	25	25	197,839	197,839	294,356	292,242	-	-
ທະນາຄານ ລາວ-ຝຣັ່ງ ຈຳກັດ	30	30	150,000	150,000	198,050	194,063	-	-
ທະນາຄານ ລາວ-ຈີນ ຈຳກັດ	31.35	31.35	157,723	157,723	214,112	203,403	-	-
ບໍລິສັດ ປະກັນໄພລາວ-ຫວຽດ	35	35	10,500	10,500	29,800	33,128	-	(4,531)
ບໍລິສັດ ລາວເນີເຊິນນໍ ເພເມັ້ນເນັດເວີກ ຈຳກັດ	20	20	6,800	6,800	26,615	20,751	-	(4,914)
ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ	10	10	2,000	2,000	2,783	2,504	-	-
ລວມ			**594,862**	**594,862**	**853,636**	**831,516**	**-**	**(13,687)**

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ (ຕໍ່)

- ບໍລິສັດ ຫຼັກຊັບ ທຄຕລ - ກທ ຈຳກັດ ເປັນທຸລະກິດໜຶ່ງທີ່ຈົດທະບຽນຢູ່ ສປປ ລາວ ແລະ ດຳເນີນທຸລະກິດ ພາຍໃຕ້ໃບ ທະບຽນວິສາຫະກິດເລກທີ 180-10 ລົງວັນທີ 14 ທັນວາ 2010 ອອກໂດຍກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ແຫ່ງ ສປປ ລາວ, ວຽກງານຕົ້ນຕໍຂອງບໍລິສັດດັ່ງກ່າວ ແມ່ນສະໜອງການບໍລິການທາງດ້ານນາຍໜ້າ, ການ ຄ້ຳປະກັນການ ອອກຮຸ້ນ ແລະ ບໍລິການອື່ນໆ.

- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ (LVB) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ, ເຊິ່ງມີສຳນັກງານໃຫຍ່ ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ດຳເນີນທຸລະກິດສະໜອງການບໍລິການທາງດ້ານທະນາຄານ. ເປັນບໍລິສັດທີ່ຮ່ວມທຶນກັບ ທະນາຄານເພື່ອການລົງທຶນ ແລະ ການພັດທະນາຂອງຫວຽດນາມ, ເຊິ່ງເປັນທະນາຄານທຸລະກິດລັດທີ່ດຳເນີນທຸລະກິດຢູ່ ສສ ຫວຽດນາມ. LVB ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນການທະນາຄານ ລົງວັນທີ 31 ມີນາ 2000 ອອກໂດຍ ທະນາຄານແຫ່ງ ສປປ ລາວ ເປັນໄລຍະເວລາ 30 ປີ. ໃນປີ 2015, LVB ໄດ້ເພີ່ມທຶນຈົດທະບຽນເປັນ 791,357,560,000 ກີບ. ອັດຕາສ່ວນກຳມະສິດຂອງທະນາຄານໃນ ທຄລ ພາຍຫຼັງທຶນເພີ່ມຂຶ້ນ 25% ອີງຕາມ ໃບ ອະນຸຍາດການລົງທຶນ ເລກທີ 004-15/KH-DDT4 ທີ່ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ, ວັນທີ 24 ສິງຫາ 2015 ທຽບເທົ່າເງິນກີບເທົ່າກັບ 197,839 ລ້ານກີບ (2025: 197,839 ລ້ານກີບ).

- ບໍລິສັດປະກັນໄພລາວຫວຽດ (LVI) ເປັນທຸລະກິດທີ່ຈົດທະບຽນເປັນບໍລິສັດຮ່ວມທຶນ ຢູ່ ສປປ ລາວ, ສະໜອງການບໍລິການ ທາງດ້ານການປະກັນໄພ ພາຍໃຕ້ໃບອະນຸຍາດການລົງທຶນເລກທີ 077/08/FIMC ອອກໂດຍຄະນະກຳມະການຄຸ້ມຄອງ ການລົງທຶນຕ່າງປະເທດ, ລົງວັນທີ 09 ມິຖຸນາ 2008. ເປັນການຮ່ວມທຶນກັບບໍລິສັດຮຸ້ນສ່ວນປະກັນໄພ BIDV ແລະ ທະນາຄານຮ່ວມທຸລະກິດລາວຫວຽດ. ໃນວັນທີ 31 ມີນາ 2026, ທະນາຄານມີການປະກອບທຶນທັງໝົດໃນມູນຄ່າ 1,050,000 ໂດລາ ຫຼື ທຽບເທົ່າກັບ 9,168 ລ້ານກີບ. (2025: 9,168 ລ້ານກີບ).

- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນ ການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບທະບຽນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍ ທະນາຄານແຫ່ງ ສປປ ລາວ. ໃນປີ 2024, LCNB ເພີ່ມທຶນຈາກ 1,229 ຮຸ້ນເປັນ 1.563 ຮຸ້ນ ແຕ່ BCEL ໄດ້ຍິນຍອມ ທີ່ຈະຮັກສາອັດຕາສ່ວນຄວາມເປັນເຈົ້າຂອງເດີມ 490 ຮຸ້ນ ແລະ ບໍ່ມີການຊຳລະເພີ່ມເຕີມສຳລັບການເພີ່ມທຶນດັ່ງກ່າວ ເຮັດ ໃຫ້ອັດຕາສ່ວນຮ້ອຍການຄວາມເປັນເຈົ້າຂອງຂອງ BCEL ຫຼຸດລົງຈາກ 39.87% ເປັນ 31.35%. ນະວັນທີ 31 ມີນາ 2026, ມູນຄ່າການລົງທຶນທັງໝົດແມ່ນ 157,723 ລ້ານກີບ.

- ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດຳເນີນທຸລະກິດຢູ່ ປາຣີ, ປະເທດ ຝຣັ່ງ. BFL ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊື່ວຄາວ ລົງວັນທີ 01 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດ ໝາຍຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມບົດບັນຍັດຂອງປະທານປະເທດ ອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ. 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ. ໃນວັນທີ 31 ມີນາ ປີ 2026, ມູນຄ່າການປະກອບສ່ວນຂອງທະນາຄານໃນບໍລິສັດນີ້ແມ່ນ 150,000 ລ້ານກີບ (2025: 150,000 ລ້ານກີບ).

16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ (ຕໍ່)

- ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ແມ່ນເປັນບໍລິສັດໜຶ່ງທີ່ສ້າງຕັ້ງໃນ ສປປ ລາວ ພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 0349 ອອກໂດຍ ກົມຄຸ້ມຄອງທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ລົງວັນທີ 12 ມີນາ 2019 ເຊິ່ງໃຫ້ບໍລິການທາງການເງິນ. ເປັນການຮ່ວມມືລະຫວ່າງ ທະນາຄານແຫ່ງ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານຮ່ວມພັດທະນາ ແລະ ທະນາຄານລາວ-ຫວຽດ. ບໍລິສັດມີທຶນຈົດທະບຽນ ມູນຄ່າ 34,000 ລ້ານກີບ. ໃນວັນທີ 31 ມີນາ 2026, ການປະກອບທຶນທັງໝົດຂອງທະນາຄານໃນບໍລິສັດນີ້ມີ ຈຳນວນ 6,800 ລ້ານກີບ (2025: 6,800 ລ້ານກີບ).

- ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ຕລຕ) (LFX) ໄດ້ສ້າງຕັ້ງຢູ່ໃນ ສປປ ລາວ ພາຍໃຕ້ ໃບທະບຽນວິສາຫະກິດ ສະບັບເລກທີ 4016 ທີ່ອອກໂດຍກົມທະບຽນວິສາຫະກິດ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ລົງວັນທີ 22 ຕຸລາ 2024 ແລະ ດຳເນີນທຸລະກິດດ້ານການບໍລິການດ້ານ ການເງິນ, ເປັນສະມາຄົມລະຫວ່າງທະນາຄານແຫ່ງ ສປປ ລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານ ເອັສທີ ຈຳກັດ, ທະນາຄານ ອິນດູຈີນ, ທະນາຄານ ລາວ - ຝຣັ່ງ ຈຳກັດ, ທະນາຄານ ພັດທະນາລາວ ຈຳກັດ, ທະນາຄານ ພົງສະຫວັນ, ທະນາຄານ ມາຮຸຣານ ເຈແປນ ລາວ. ທຶນຈົດທະບຽນ ຕາມກົດໝາຍແມ່ນ 20,000 ລ້ານກີບ. ນະວັນທີ 31 ມີນາ 2026, ທຶນຈົດທະບຽນປະກອບແລ້ວຂອງທະນາຄານໃນບໍລິສັດນີ້ແມ່ນ 2,000 ລ້ານກີບ (2025: 2,000 ລ້ານກີບ).

17. ຊັບສິນບັດຄົງທີ່ ແລະ ອຸປະກອນ

	ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສິນບັດຄົງທີ່ພວມເຄື່ອນຍ້າຍ ລ້ານກີບ	ອາຄານ ແລະ ສ່ວນປັບປຸງ ລ້ານກີບ	ອຸປະກອນ ຫ້ອງການ ລ້ານກີບ	ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ພາຫະນະ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 2026 - ກວດສອບ						
ຕົ້ນທຶນ	238,990	585,791	536,220	41,504	76,935	1,479,440
ຫັກ : ຄ່າຫຼຸ້ຍຫ້ຽນສະສົມ	-	(327,363)	(334,582)	(34,446)	(30,867)	(727,258)
ມູນຄ່າຕາມບັນຊີສຸດທິ	**238,990**	**258,428**	**201,637**	**7,058**	**46,069**	**752,182**
ສຳລັບໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດ ວັນທີ 31 ມີນາ 2026						
ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ	238,990	258,428	201,637	7,058	46,069	752,182
ຊື້ເພີ່ມໃໝ່	34,507	249	330	157	-	35,245
ໂອນເຂົ້າ/(ອອກ)	(15,993)	8,166	4,939	522	-	(2,366)
ຫັກ : ຄ່າຫຼຸ້ຍຫ້ຽນສະສົມ	-	(8,163)	(16,376)	(743)	(2,661)	(27,944)
ຍອດເຫຼືອມູນຄ່າຕາມບັນຊີສຸດທິ - ກ່ອນການກວດສອບ	**257,503**	**258,679**	**190,531**	**6,995**	**43,408**	**757,117**
ໃນວັນທີ 31 ມີນາ 2026						
ຕົ້ນທຶນ	257,503	594,206	541,490	42,184	76,935	1,152,318
ຫັກ : ຄ່າຫຼຸ້ຍຫ້ຽນສະສົມ	-	(335,527)	(350,959)	(35,189)	(33,527)	(755,201)
ມູນຄ່າຕາມບັນຊີສຸດທິ - ກ່ອນການກວດສອບ	**257,503**	**258,679**	**190,531**	**6,995**	**43,408**	**757,117**

18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ຊັບສິນບັດຄົງທີ່ບໍ່ມີຕົວຕົນພວມດຳເນີນການ ລ້ານກີບ	ສິດນຳໃຊ້ທີ່ດິນ ລ້ານກີບ	ຊັອບແວ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 2026 - ກວດສອບ				
ຕົ້ນທຶນ	42,639	300,476	106,001	449,113
ຄ່າເສື່ອມສະສົມ	-	-	(64,038)	(64,039)
ມູນຄ່າຕາມບັນຊີສຸດທິ	**42,639**	**300,476**	**41,962**	**385,077**
ສຳລັບໄລຍະສາມເດືອນຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026				
ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ	42,639	300,476	41,962	385,077
ຊື້ເພີ່ມໃໝ່	-	-	-	-
ໂອນເຂົ້າ/(ອອກ)	(702)	(702)	-	-
ຄ່າເສື່ອມພາຍໃນປີ	-	-	(4,719)	(4,719)
ໃນວັນທີ 31 ມີນາ 2026 - ກ່ອນການກວດສອບ	**41,937**	**301,178**	**37,243**	**380,358**
ໃນວັນທີ 31 ມີນາ 2026				
ຕົ້ນທຶນ	41,937	301,178	106,001	449,114
ຄ່າເສື່ອມສະສົມ	-	-	(68,757)	(68,757)
ມູນຄ່າຕາມບັນຊີສຸດທິ - ກ່ອນການກວດສອບ	**41,937**	**301,178**	**37,244**	**380,358**

19. ສິດໃນການນຳໃຊ້ຊັບສິນ

ການເຄື່ອນໄຫວ ຂອງສິດໃນການນຳໃຊ້ຊັບສິນ ສຳລັບໄລຍະ ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2026 - ກວດສອບ	**76,751**
ເພີ່ມຂຶ້ນ*	1,575
ສະສາງອອກ	-
ຄ່າຫຼຸ້ຍຫ້ຽນ	(6,387)
ຍອດເຫຼືອ ໃນວັນທີ 31 ມີນາ 2026 - ກ່ອນການກວດສອບ	**71,939**

* ການເພີ່ມຂຶ້ນຂອງສິນຊັບສິດໃນການນຳໃຊ້ໃນໄລຍະນີ້ສ່ວນໃຫຍ່ ແມ່ນຍ້ອນການຮັບຮູ້ສັນຍາເຊົ່າສຳລັບອາຄານທີ່ໄດ້ເຊົ່າ ເພື່ອຮອງຮັບໜ່ວຍງານບໍລິການ.

20. ຊັບສິນອື່ນໆ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ຊັບສິນມີໄວ້ເພື່ອຂາຍ (i)	2,947,328	2,950,251
ຊັບສິນອື່ນໆທີ່ລໍຖ້າໂອນບັນຊີ ຫຼື ສະສາງ(ii)	570,548	930,993
ເງິນລ່ວງໜ້າສຳລັບການຕື່ມເງິນ (iii)	123,273	155,990
ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ	22,236	25,261
ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ	54,556	21,715
ອາກອນລ່ວງໜ້າ	-	27,130
ເງິນຈ່າຍລ່ວງໜ້າສຳລັບຜູ້ສະໜອງ	73,409	68,641
ອື່ນໆ	178,859	175,547
	3,970,210	**4,355,528**

(i) ສິນຊັບທີ່ມີໄວ້ເພື່ອຂາຍ ປະກອບມີ ຊັບສິນທີ່ຖືກໂອນຈາກລູກຄ້າໃຫ້ທະນາຄານ ເພື່ອປະຕິບັດພັນທະໜີ້ເງິນກູ້ຂອງພວກເຂົາ.

(ii) ສິນຊັບອື່ນໆທີ່ກຳລັງລໍຖ້າການໂອນບັນຊີ ຫຼື ການຊຳລະສະສາງ ສະແດງເຖິງບັນຊີລູກໜີ້ ທີ່ໄດ້ຖືກລຶບລ້າງແລ້ວ ແຕ່ຍັງບໍ່ທັນໄດ້ຮັບການຊຳລະສະສາງ ໂດຍຫຼັກໆ ແມ່ນຈາກການໂອນເງິນລະຫວ່າງທະນາຄານ ແລະ ທຸລະກຳຜ່ານບັດທີ່ດຳເນີນການຜ່ານເຄືອຂ່າຍການຊຳລະເງິນ. ການຊຳລະສະສາງຂັ້ນສຸດທ້າຍແມ່ນກຳລັງລໍຖ້າກວດສອບຢ່າງຄົບຖ້ວນລະຫວ່າງຄູ່ສັນຍາທີ່ກ່ຽວຂ້ອງ ໂດຍປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້.

(iii) ເງິນລ່ວງໜ້າສຳລັບການຕື່ມເງິນ ໝາຍເຖິງ ການຈ່າຍເງິນລ່ວງໜ້າ ເພື່ອຊື້ມູນຄ່າການໂທຂອງເຄືອຂ່າຍໂທລະສັບ ເພື່ອຈຸດປະສົງໃນການໃຫ້ບໍລິການຕື່ມເງິນແກ່ລູກຄ້າຂອງທະນາຄານ.

21. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນຝາກທະເສລາຍວັນ	**3,671,107**	**5,575,482**
- ເປັນເງິນກີບ	1,908,179	2,292,609
- ເປັນເງິນຕາຕ່າງປະເທດ	1,762,928	3,282,873
ເງິນຝາກປະຢັດ	**348,542**	**314,872**
- ເປັນເງິນກີບ	153,323	198,008
- ເປັນເງິນຕາຕ່າງປະເທດ	195,218	116,864
ເງິນຝາກມີກຳນົດ	**1,103,503**	**78,141**
- ເປັນເງິນກີບ	1,813	1,296
- ເປັນເງິນຕາຕ່າງປະເທດ	1,101,690	76,845
ອື່ນໆ	**156,647**	**159,265**
	5,279,799	**6,127,760**

21. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ ໃນໄລຍະ ມີດັ່ງລຸ່ມນີ້:

	31 ມີນາ 2026 % ຕໍ່ປີ	31 ທັນວາ 2025 % ຕໍ່ປີ
ເງິນຝາກກະແສລາຍວັນ	0.00% - 6.00%	0.00% - 6.00%
ເງິນຝາກປະຢັດ	0.00% - 1.25%	0.00% - 1.25%
ເງິນຝາກມີກຳນົດ	1.15 – 6.00%	1.15 – 6.00%

22. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນຝາກກະແສລາຍວັນ	**20,724,816**	**19,764,196**
ເງິນຝາກກະແສລາຍວັນເປັນເງິນກີບ	6,748,023	6,345,148
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	13,976,792	13,419,048
ເງິນຝາກປະຢັດ	**90,977,832**	**89,285,544**
ເງິນຝາກປະຢັດເປັນເງິນກີບ	35,311,356	35,972,407
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	55,666,477	53,313,137
ເງິນຝາກມີກຳນົດ	**36,630,442**	**35,766,926**
ເງິນຝາກມີກຳນົດເປັນເງິນກີບ	8,804,084	8,979,892
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	27,826,358	26,787,034
ເງິນອາງຄ້ຳປະກັນ	**126,704**	**62,413**
ເງິນອາງຄ້ຳປະກັນເປັນເງິນກີບ	56,167	62,326
ເງິນອາງຄ້ຳປະກັນເປັນເງິນຕາຕ່າງປະເທດ	70,537	87
ໜີ້ຕ້ອງສົ່ງລູກຄ້າອື່ນໆ	**391,407**	**628,453**
	148,851,201	**145,507,532**

ອັດຕາດອກເບ້ຍໃນລະຫວ່າງປີສຳລັບເງິນຝາກແຕ່ລະຜະລິດດັ່ງກ່າວນີ້ແມ່ນ:

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ ແລະ ບາດ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 0.00% – 3.95%, 0.00% - 2.25% ແລະ 0.00% – 1.85% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດ ເປັນສະກຸນເງິນກີບ, ໂດລາ ແລະ ບາດ ມີກຳນົດຕັ້ງແຕ່ 3, 6, 9, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3.16% – 7.00%, 1.35% - 7.00 % ແລະ 1.10% – 6.70% ຕໍ່ປີ ຕາມລຳດັບ.

23. ເງິນກູ້ຍືມຈາກທະນາຄານອື່ນ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນກູ້ຍືມຈາກທະນາຄານແຫ່ງ ສປປ ລາວ	3,563,195	3,473,125
ເງິນກູ້ຍືມ ອື່ນໆ	126,640	126,460
	3,689,835	**3,599,765**

ເງິນກູ້ຍືມຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 31 ມີນາ 2026 ລວມມີ:

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 97,900,000 ໂດລາ (ສະກຸນເງິນເດີມແມ່ນ 100,000,000 ໂດລາ ໂດຍມີອັດຕາດອກເບ້ຍ 5.30% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ໂຄງການເຂື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ໄລຍະເວລາຂອງສັນຍາກູ້ຍືມແມ່ນຕັ້ງແຕ່ວັນທີ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ.

- ເງິນກູ້ໄລຍະຍາວຈຳນວນ 44,242,000 ໂດລາ (ຈາກວົງເງິນກູ້ຍືມເດີມ 100,000,000 ໂດລາ, ອັດຕາດອກເບ້ຍ 5.50%) ເພື່ອຈຸດປະສົງໃນການສະໜອງສິນເຊື່ອໃຫ້ແກ່ບາງໂຄງການເຂື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜຸນຈາກລັດຖະບານ. ສັນຍາກູ້ຍືມສະບັບນີ້ ເດີມມີຜົນສັກສິດນັບແຕ່ວັນທີ 27 ສິງຫາ 2015 ຫາ 27 ສິງຫາ 2025; ແຕ່ໃນໄລຍະປະຈຸບັນ, ວັນຄົບກຳນົດຕາມສັນຍາ ແມ່ນໄດ້ຖືກຕໍ່ເວລາອອກໄປຈົນເຖິງວັນທີ 27 ສິງຫາ 2026. ການຊຳລະດອກເບ້ຍ ແມ່ນປະຕິບັດເປັນລາຍໄຕມາດ.

- ເງິນກູ້ໄລຍະຍາວຈຳນວນ 10,050,000,000 ກີບ (ວົງເງິນກູ້ 15,050,000,000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຍືມຈະຖືກຊຳລະເປັນ 3 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດໃນປີ 2025 ແມ່ນ 30%, ການຊຳລະຄືນຄັ້ງທີສອງໃນປີ 2026 30% ແລະ ການຊຳລະຄືນຄັ້ງທີສາມໃນປີ 2027 40%. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖຸນາ ແລະ ທັນວາ) ໄລຍະເວລາການກູ້ຍືມແມ່ນເລີ່ມຕົ້ນວັນທີ 15 ມີນາ 2021 ເຖິງ ວັນທີ 15 ມີນາ 2027.

- ເງິນກູ້ໄລຍະຍາວຈຳນວນ 110,000,000,000 ກີບ (ວົງເງິນກູ້ 110,000,000,000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຍືມຈະຖືກຊຳລະເປັນ 2 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດ ແມ່ນ 40% ແລະການຊຳລະຄືນຄັ້ງທີສອງ 60% ໂດຍເລີ່ມຊຳລະໃນປີ 2026. ດອກເບ້ຍ ແມ່ນຊຳລະສອງຄັ້ງຕໍ່ປີ (ມິຖຸນາ ແລະ ທັນວາ) ໄລຍະເວລາການກູ້ຍືມແມ່ນເລີ່ມຕົ້ນວັນທີ 3 ພະຈິກ 2022 ເຖິງ ວັນທີ 3 ພະຈິກ 2027.

23. ເງິນກູ້ຢືມຈາກທະນາຄານອື່ນ (ຕໍ່)

- ເງິນກູ້ໄລຍະຍາວຈຳນວນ 120,000,000,000 ກີບ (ວົງເງິນກູ້ 120,000,000,000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດລົງທຶນໃນການພັດທະນາເທັກໂນໂລຊີທາງດ້ານການແພດ ແລະ ຢາ (ຈັດຊື້ອຸປະກອນໃນການຜະລິດ, ວັດຖຸດິບໃນການຜະລິດ ແລະ ພັດທະນາບຸກຄະລາກອນ ແລະ ລົງທຶນໃນການກໍ່ສ້າງໂຮງງານ). ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 4 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງລະ 25% ຂອງແຕ່ລະປີ ເລີ່ມຊຳລະຄັ້ງທຳອິດ ປີ 2025. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 27 ທັນວາ 2021 ເຖິງ ວັນທີ 27 ທັນວາ 2028.

- ເງິນກູ້ຢືມລະຍະຍາວ ຈຳນວນ 97,524,000,000 ກີບ (ວົງເງິນສິນເຊື່ອ 106,790,000,000 ກີບ ດ້ວຍອັດຕາດອກເບ້ຍ 2.50%) ເພື່ອໃຫ້ສິນເຊື່ອແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ເງິນຕົ້ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນປີ 2024 ຫາ 2029.

- ເງິນກູ້ຢືມລະຍະຍາວ ຈຳນວນ 80,450,000,000.00 ກີບ (ວົງເງິນສິນເຊື່ອ 80,450,000,000.00 ກີບ ດ້ວຍອັດຕາດອກເບ້ຍ 2.50%) ເພື່ອໃຫ້ສິນເຊື່ອແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສືບຕໍ່ ຫຼືຂະຫຍາຍທຸລະກິດ. ເງິນຕົ້ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນປີ 2025 ຫາ 2030.

ເງິນກູ້ຢືມ ອື່ນໆ ໃນວັນທີ 31 ທັນວາ 2025 ລວມມີ:

- ເງິນກູ້ໄລຍະຍາວຈຳນວນ 21,000,000,000 (ວົງເງິນກູ້ 21,000,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນ ເລີ່ມຕົ້ນວັນທີ 6 ທັນວາ 2022 ເຖິງ ວັນທີ 6 ທັນວາ 2033.

- ເງິນກູ້ໄລຍະຍາວຈຳນວນ 30,260,000,000 (ວົງເງິນກູ້ 30,260,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນ ເລີ່ມຕົ້ນວັນທີ 13 ທັນວາ 2023 ເຖິງ ວັນທີ 20 ຕຸລາ 2034.

- ເງິນກູ້ໄລຍະຍາວຈຳນວນ 11,000,000,000 (ວົງເງິນກູ້ 11,000,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນ ເລີ່ມຕົ້ນວັນທີ 28 ທັນວາ 2023 ເຖິງ ວັນທີ 8 ທັນວາ 2034.

- ເງິນກູ້ໄລຍະຍາວຈຳນວນ 64,380,000,000 (ວົງເງິນກູ້ 64,380,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນ ເລີ່ມຕົ້ນວັນທີ 29 ພະຈິກ 2024 ເຖິງ ວັນທີ 29 ພະຈິກ 2035.

24. ອາກອນ

24.1 ລາຍຈ່າຍອາກອນກຳໄລ

ອົງປະກອບສຳຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ລາຍຈ່າຍອາກອນກຳໄລ	(76,522)	(41,430)
ລາຍຮັບອາກອນເຍື່ອນຊຳລະ	(574)	12,324
ລວມລາຍຈ່າຍອາກອນພາຍໃນປີ	**(77,096)**	**(29,106)**

ທະນາຄານມີພັນທະຕ້ອງຈ່າຍອາກອນກຳໄລໃນອັດຕາ 20% (2025: 20%) ຂອງກຳໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

24.2 ອາກອນກຳໄລໃນປີ ("PT")

ການຄິດໄລ່ຂອງອາກອນກຳໄລສຳລັບໄລຍະສາມເດືອນ ທີ່ສິ້ນສຸດວັນທີ 31 ມີນາ 2026 ແລະ 2025 ແມ່ນມີດັ່ງຕໍ່ໄປນີ້:

	31 ມີນາ 2026 ລ້ານກີບ	31 ມີນາ 2025 ລ້ານກີບ
ກຳໄລກ່ອນອາກອນ	**405,926**	**177,522**
ດັດແກ້ສຳລັບ:		
- ສ່ວນຕ່າງຂອງອາກອນຍື້ນຊຳລະຫວ່າງ IFRS ແລະ LAS	(29,715)	12,159
ກຳໄລກ່ອນອາກອນຕາມເອກະສານລາຍງານການເງິນ ຂອງ ລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານແຫ່ງ ສປປ ລາວ	**376,211**	**189,681**
ອັດຕາອາກອນ 20% (2025: 20%)	**75,242**	**37,936**
ເພີ່ມຂຶ້ນ/(ຫຼຸດລົງ):		
- ລາຍຮັບທີ່ຍົກເວັ້ນອາກອນກຳໄລ	(7,945,332)	(3,059,488)
- ລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ	7,950,910	3,076,958
- ລາຍການປັບອື່ນໆ	164	-
ລາຍຈ່າຍອາກອນທັງໝົດໃນງວດ	**76,522**	**41,430**

24. ອາກອນກຳໄລໃນປີ (ຕໍ່)

24.2 ອາກອນກຳໄລໃນປີ ("PT") (ຕໍ່)

	31 ມີນາ 2026 ລ້ານກີບ	31 ມີນາ 2025 ລ້ານກີບ
ລາຍຈ່າຍອາກອນທັ້ງໝົດໃນງວດ	**76,522**	**41,430**
ອາກອນກຳໄລຕ້ອງຈ່າຍຕົ້ນປີ	101,445	135,100
ດັດແກ້ອາກອນ	(157)	
ຈ່າຍໃນງວດ	(79,839)	(101,082)
ອາກອນຄ້າງຊຳລະໃນງວດ	**97,970**	**75,448**

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະກົດລະບຽບ ທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງ ກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ສຳລັບປີອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງ ກົມ ສ່ວຍສາອາກອນ.

24.3 ອາກອນຊັບສິນ (ໜີ້ສິນ) ເຍື້ອນຊຳລະ

	ໃບລາຍງານ ຖານະການເງິນ		ໃບລາຍງານ ຜົນໄດ້ຮັບ		ໃບລາຍງານຜົນໄດ້ຮັບ ສັງລວມ	
	31 ມີນາ 2026 ລ້ານກີບ	2025 ລ້ານກີບ	31 ມີນາ 2026 ລ້ານກີບ	2025 ລ້ານກີບ	31 ມີນາ 2026 ລ້ານກີບ	2025 ລ້ານກີບ
ອາກອນຊັບສິນເຍື້ອນຊຳລະ	526,673	311,555	217,344	85,395	(2,225)	-
ອາກອນໜີ້ສິນເຍື້ອນຊຳລະ	(565,453)	(258,775)	(306,678)	(51,678)	-	(3,837)
ອາກອນຊັບສິນເຍື້ອນຊຳລະ,ສຸດທິ	**(38,780)**	**52,780**				
ອາກອນລໍ້າຊຳລະສະສາງສຸດທິທີ່ຕ້ອງປັນທຶກ/ລ້າງ ອອກໃນໃບລາຍງານຜົນໄດ້ຮັບ			**(89,334)**	**33,712**		
ອາກອນລໍ້າຊຳລະສະສາງສຸດທິທີ່ຕ້ອງປັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ ສັງລວມ					**(2,225)**	**(3,837)**

25. ໜີ້ສິນອື່ນໆ

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ລາຍການລໍຖ້າສະສາງ	810,511	410,954
ຜາລະຜູກພັນຂອງຜົນປະໂຫຍດທີ່ກຳນົດໄວ້ຫຼັງອອກການ	114,391	113,968
ໜີ້ຕ້ອງສົ່ງຜູ້ສະໜອງ	141,447	68,183
ອາກອນທີ່ຕ້ອງຈ່າຍອື່ນໆ	54,831	53,739
ໜີ້ຕ້ອງສົ່ງພະນັກງານ	980	124,905
ອື່ນໆ	88,227	4,520
	1,210,390	**776,269**

26. ທຶນຈົດທະບຽນ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 31 ມີນາ 2026 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	ຈຳນວນຮຸ້ນ	%
ລັດຖະບານ	926,922,633	60%
ຄູ່ຮ່ວມຮຸ້ນທາງຍຸດທະສາດ	154,487,295	10%
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ	463,462,072	30%
	1,544,872,000	100%

27. ຄັງສະສົມຕາມລະບຽບການ

	ຄັງສະສົມຕາມລະບຽບການ ລ້ານກີບ	ຄັງຂະຫຍາຍທຸລະກິດ ແລະ ສຳຮອງອື່ນໆ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2025 - ກວດສອບ	**268,759**	**886,069**	**1,154,828**
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2024	54,732	388,720	443,452
ຍອດເຫຼືອ ໃນວັນທີ 31 ທັນວາ 2025 - ກວດສອບ	**323,491**	**1,247,789**	**1,598,280**
ຍອດເຫຼືອ ໃນວັນທີ 1 ມັງກອນ 2026 - ກວດສອບ	**323,491**	**1,247,789**	**1,598,280**
ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2025	-	-	-
ຍອດເຫຼືອ ໃນວັນທີ 31 ມີນາ 2026	**323,491**	**1,247,789**	**1,598,280**

ອີງຕາມກົດໝາຍວ່າ ທຫລ (ສະບັບປັບປຸງ) ລົງວັນທີ 30 ສິງຫາ 2023, ມາດຕາ 67 ທີ່ກ່ຽວກັບກຳໄລ ແລະ ຂາດທຶນປະຈຳປີ, ທະນາຄານມີພັນທະຕ້ອງຈັດສັນ (ກຳໄລ) ເພື່ອຕັ້ງເປັນກອງທຶນແຮໄວ້ບັງຄັບ, ກອງທຶນຂະຫຍາຍທຸລະກິດ, ກອງທຶນແຮໄວ້ອື່ນໆ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຫຸ້ນ, ເຊິ່ງຕ້ອງໄດ້ຮັບການອະນຸມັດຈາກກອງປະຊຸມສາມັນຜູ້ຖືຫຸ້ນປະຈຳປີ.

28. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດ ໂດຍສະແດງມູນຄ່າໃນໃບລາຍງານຖານະການເງິນ ດັ່ງລາຍລະອຽດລຸ່ມນີ້:

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	6,349,388	5,725,690
ເງິນຝາກກະແສລາຍວັນຢູ່ ທຫລ	15,180,075	13,903,544
ເງິນຝາກກະແສລາຍວັນ ແລະຝາກປະຢັດຢູ່ທະນາຄານອື່ນ	12,724,924	15,354,613
ເງິນຝາກມີກຳນົດ ພາຍໃນ 90 ວັນ	5,308,748	3,379,334
	39,563,136	**38,363,181**

29. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii)	11,015,968	7,805,530
ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ (ii)	7,819	3,874
ໜັງສືສິນເຊື່ອກັບທີ່	130,264,736	224,629,968
ໜັງສືຄ້ຳປະກັນທາງການເງິນ (i)	1,237,803	1,075,146
	142,526,327	**223,514,518**

(i) ໜັງສືຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນໜຶ່ດ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ).

(ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ,ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງລາຍງານຢູ່ໃນລາຍງານກະແສເງິນສົດ. ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕ່ຳກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມຫຍຸ້ງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ໂດຍທົ່ວໄປແມ່ນມີລະດັບຄວາມສ່ຽງສິນເຊື່ອຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

30. ຍັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 31 ມີນາ 2026 ມີລາຍລະອຽດດັ່ງລຸ່ມນີ້:

1) ບໍລິສັດແມ່

ທະນາຄານຖືກຄວບຄຸມໂດຍບໍລິສັດດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	ປະເພດ	ສະຖານທີ່ປະກອບທຸລະກິດ
ລັດຖະບານ (ກະຊວງການເງິນ)	ບໍລິສັດແມ່	ປະເທດລາວ

ສ່ວນທີ່ເຫຼືອ 40% ຂອງການຖືຮຸ້ນທີ່ຖືໂດຍບຸກຄົນອື່ນ

2) ຍອດຄົງຄ້າງຂອງພາກສ່ວນທີ່ກ່ຽວຂ້ອງທີ່ສຳຄັນ

ຍອດຄົງຄ້າງໃນວັນທີສິ້ນສຸດງວດທີ່ໄດ້ເຮັດລາຍການກັບພາກສ່ວນທີ່ກ່ຽວຂ້ອງດັ່ງລຸ່ມນີ້:

	ກ່ອນການກວດສອບ ວັນທີ 31 ມີນາ 2026	ກ່ອນການກວດສອບ ວັນທີ 31 ມີນາ 2025
ລາຍຮັບດອກເບ້ຍ ແລະ ຄ່າຍຄິດອກເບ້ຍ		
ບໍລິສັດແມ່	222,055	216,168
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	10,597	22,189

3) ຍອດຄົງຄ້າງຂອງພາກສ່ວນທີ່ກ່ຽວຂ້ອງທີ່ສຳຄັນ

ຍອດຄົງຄ້າງໃນວັນທີສິ້ນສຸດງວດທີ່ໄດ້ເຮັດລາຍການກັບພາກສ່ວນທີ່ກ່ຽວຂ້ອງດັ່ງລຸ່ມນີ້:

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ໜີ້ຕ້ອງຮັບຈາກທະນາຄານອື່ນ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	1,800,119	2,066,859
ການລົງທຶນໃນຫລັກຊັບ		
ບໍລິສັດແມ່	17,279,320	16,541,682
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	322,870	300,300

30. ຍັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

4) ຄ່າຕອບແທນຜູ້ບໍລິຫານທີ່ສຳຄັນ

ຜູ້ບໍລິຫານທີ່ສຳຄັນຂອງທະນາຄານລວມເຖິງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. ຄ່າຕອບແທນທີ່ຈ່າຍ ແລະຄ້າງຈ່າຍສຳລັບຜູ້ບໍລິຫານສຳຄັນ ມີດັ່ງນີ້:

	ກ່ອນການກວດສອບ 31 ມີນາ 2026 ລ້ານກີບ	ກ່ອນການກວດສອບ 31 ມີນາ 2025 ລ້ານກີບ
ເງິນເດືອນ ແລະຜົນປະໂຫຍດໄລຍະສັ້ນ	2,279	1,841

31. ກຳໄລຕໍ່ຮຸ້ນ

ມູນຄ່າຂອງກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນໃນງວດນີ້ທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບຈຳນວນສະເລ່ຍຂອງຮຸ້ນສາມັນທີ່ອອກ ແລະຊຳລະແລ້ວພາຍໃນໄລຍະສາມເດືອນ.

ລາຍການດັ່ງລຸ່ມນີ້ສະແດງເຖິງຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ກຳໄລຕໍ່ຮຸ້ນ.

	ໄລຍະສາມເດືອນ ຂອງໄຕມາດທີ I ສິ້ນ ສຸດວັນທີ 31 ມີນາ 2026	ໄລຍະສາມເດືອນ ຂອງໄຕມາດທີ I ສິ້ນ ສຸດວັນທີ 30 ມີນາ 2025 ປັບປຸງໃໝ່	ໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 30 ມີນາ 2025
ຈາກການດຳເນີນງານຕໍ່ເນື່ອງທີ່ເປັນຂອງຜູ້ຖືຮຸ້ນສາມັນ ຂອງທະນາຄານ (ລ້ານກີບ)	328,830	148,416	148,416
ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ໃຊ້ສຳລັບການຄິດໄລ່ ກຳໄລຕໍ່ຮຸ້ນ ພື້ນຖານ (ຮຸ້ນ)	1,544,872,000	1,544,872,000	1,038,616,500
ກຳໄລພື້ນຖານຕໍ່ຫຸ້ນທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງ ທະນາຄານ (ກີບ)	213	96	143

32. ເງິນປັນຜົນ

31 ມີນາ 2026

ອີງຕາມມະຕິກອງປະຊຸມສາມັນຜູ້ຖືຫຸ້ນປະຈຳປີ 2025 ຂອງ ທຄຕລ, ໄດ້ມີການອະນຸມັດການຈ່າຍເງິນປັນຜົນ ສຳລັບປີທີ່ ສິ້ນສຸດວັນທີ 31 ທັນວາ 2025 ໃນອັດຕາ 200 ກີບຕໍ່ຫຸ້ນ, ລວມເປັນມູນຄ່າທັງໝົດ 308,974 ລ້ານກີບ (ອີງຕາມຈຳນວນຫຸ້ນທີ່ອອກຈຳໜ່າຍທັງໝົດ 1,544,872,000 ຫຸ້ນ). ໂດຍມີກຳນົດຈະຈ່າຍເງິນປັນຜົນໃນວັນທີ 15 ພຶດສະພາ 2026.

2025

ຫຼັງຈາກການແບ່ງຫຸ້ນທີ່ເກີດຂຶ້ນໃນວັນທີ 18 ກຸມພາ 2025 ເຊິ່ງເຮັດໃຫ້ຈຳນວນຫຸ້ນທີ່ອອກແລະຢູ່ໃນມືຜູ້ຖືຫຸ້ນເພີ່ມຈາກ 207,723,300 ຫຸ້ນ ເປັນ 1,038,616,500 ຫຸ້ນ, ການປະຊຸມສາມັນປະຈຳປີຂອງຜູ້ຖືຫຸ້ນໃນວັນທີ 30 ເມສາ 2025 ໄດ້ອະນຸມັດການຈ່າຍຜົນຕອບແທນປະຈຳປີຈາກກຳໄລສຸດທິສຳລັບປີບັນທຶກທີ່ສິ້ນສຸດໃນວັນທີ 31 ທັນວາ 2024.

ຜົນຕອບແທນຖືກປະກາດໄວ້ທີ່ 100 ກີບຕໍ່ຫຸ້ນ (ຕາມຈຳນວນຫຸ້ນຫຼັງການແບ່ງ), ລວມເປັນຈຳນວນເງິນ 103,862 ລ້ານກີບ ແລະ ໄດ້ຈ່າຍໃນວັນທີ 14 ພຶດສະພາ 2025.

33. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍງວດ 31 ມີນາ 2026

	31 ມີນາ 2026 ກີບ	31 ທັນວາ 2025 ກີບ
ໂດລາ	22,068.00	21,400.00
ເອີໂຣ	24,943.00	24,962.00
ບາດໄທ	668.90	681.63
ປອນອັງກິດ	28,580.00	28,507.00
ເຢນຍີ່ປຸ່ນ	137.01	137.20
ໂດລາອົດສະຕາລີ	14,926.00	14,282.00
ຢວນຈີນ	3,209.00	3,050.00

ທັນສະໄໝ ວ່ອງໄວ ໝັ້ນໃຈ

MODERN QUICK RELIABLE

www.bcel.com.la